vhs
DVV International

Education for Everyone. Worldwide. Lifelong.

ການ ຮ່ວມມື ເຢຍລະມັນ
DEUTSCHE ZUSAMMENARBEIT

*Newsletter*

# ການຮຽນຮູ້ຕະຫຼອດຊີວິດ & ການສຶກສານອກໂຮງຮຽນ
## ໃນ ສປປ ລາວ ແລະ ອາຊີຕາເວັນອອກສ່ຽງໃຕ້



ສະບັບທີ
2- 2021

*ສະໜັບສະໜູນໂດຍ*
Federal Ministry for Economic Cooperation and Development

vhs

DVV International

Education for Everyone. Worldwide.
Lifelong.



ຮຽນບັນດາທ່ານຜູ້ອ່ານ,

ໂດຍບໍ່ຕ້ອງສົງໃສເລີຍ: ປີທີ່ຜ່ານມາເປັນອີກປີໜຶ່ງທີ່ມີຄວາມທ້າທາຍທີ່ສຸດໃນຮອບຫຼາຍປີທີ່ຜ່ານມາ. ໃນອີກດ້ານໜຶ່ງ ຍັງມີຄວາມກັງວົນກ່ຽວກັບການຕິດເຊື້ອໂຄວິດ-19 ທີ່ຍັງມີການລະບາດໃນກໍາປູເຈຍ ແລະ ລາວ ລວມທັງການຄາດຄະເນອັດຕາການສັກວັກຊີນ. ແລະ ໃນອີກທາງໜຶ່ງ, ຜົນກະທົບຂອງຂອງມັນແມ່ນ ຜົນກະທົບຂອງມາດຕະການເພື່ອຫຼຸດຜ່ອນຄວາມສ່ຽງທີ່ເກີດຈາກຈາກການລະບາດໃຫຍ່ນັ້ນ ມີຜົນກະທົບຢ່າງໃຫຍ່ຫຼວງຕໍ່ກັບວຽກງານ ແລະ ຊີວິດປະຈໍາວັນຂອງພວກເຮົາ.

ນອກຈາກນີ້, ການປິດສະຖາບັນການສຶກສາທົ່ວທຸກຊັ້ນ ໄດ້ສົ່ງຜົນກະທົບຕໍ່ຊີວິດຂອງພວກເຮົາ ແລະ ລູກຫຼານຂອງພວກເຮົາ ຢ່າງຫຼວງຫຼາຍ. ເຖິງແມ່ນວ່າຜົນກະທົບດັ່ງກ່າວນີ້ ຈະຍັງຫ່າງໄກຫຼາຍໃນເວລາທີ່ໂຮງຮຽນເປີດຄືນໃໝ່, ແຕ່ພວກເຮົາຈະຮູ້ສຶກໄດ້ໃນອີກຫຼາຍປີຂ້າງໜ້າ ແລະ ຈະເປັນສິ່ງທ້າທາຍສໍາລັບພວກເຮົາໃນອະນາຄົດ ໃນວຽກງານການສຶກສາຜູ້ໃຫຍ່. ເນື່ອງຈາກວ່າ ຂະແໜງການສຶກສານອກໂຮງຮຽນ ທັງໃນ ລາວ ແລະ ກໍາປູເຈຍ ແມ່ນຄູ່ຮ່ວມພັດທະນາທີ່ໃກ້ຊິດທີ່ສຸດຂອງ ດີວີວີ ອິນເຕີເນເຊິນແນວ ເຮົາຈຶ່ງຕ້ອງຢືນຢັນວ່າ ກຸ່ມເປົ້າໝາຍຂອງພວກເຮົາຈະເພີ່ມຂຶ້ນ ເນື່ອງຈາກອັດຕາການອອກໂຮງຮຽນທີ່ຫຼາຍຂຶ້ນ ໃນຊ່ວງເວລາຂອງການຮຽນອອນໄລ ເຊິ່ງມີເດັກນ້ອຍຈໍານວນຫຼາຍຖືກກີດກັນ ເນື່ອງຈາກບໍ່ມີອິນເຕີເນັດ, ບໍ່ມີອຸປະກອນ ແລະ ລະດັບການສຶກສາຂອງພໍ່ແມ່ທີ່ບໍ່ສາມາດສະໜັບສະໜູນເດັກນ້ອຍໄດ້. ນີ້ເປັນອີກຄັ້ງທີ່ສະແດງໃຫ້ເຫັນເຖິງຄວາມສໍາຄັນຂອງການສຶກສາຜູ້ໃຫຍ່ ເພາະວ່າທ້າຍທີ່ສຸດແລ້ວ ການໃຫ້ຄວາມຮູ້ແກ່ພໍ່ແມ່ ກໍໝາຍເຖິງການໃຫ້ການສຶກສາແກ່ຄົນລຸ້ນຫຼັງເຊັ່ນດຽວກັນ.

ເມື່ອພິຈາລະນາເຖິງການສຶກສາຜູ້ໃຫຍ່ໃນມຸມກ້ວາງ ແລະ ເປັນສາກົນຫຼາຍຂຶ້ນ ເຮົາຈະເຫັນວ່າກໍາລັງຈະມີ 2 ເຫດການໃຫຍ່ເກີດຂຶ້ນ. ໃນເດືອນມິຖຸນາ ຂອງປີໜ້າ, ເຢຍລະມັນສະສະເຫຼີມສະຫຼອງ "Volkshochschultag"- ກອງປະຊຸມໃຫຍ່ຂອງສູນການສຶກສາຜູ້ໃຫຍ່ໃນປະເທດ ເຊິ່ງຈະຈັດຂຶ້ນໃນທຸກໆ 5 ຫາ 6 ປີ ແລະ ກອງປະຊຸມນີ້ລວບລວມຄູ່ຮ່ວມພັດທະນາຈາກສາກົນຂອງ ດີວີວີ ອິນເຕີເນເຊິນແນວ ຈາກທົ່ວໂລກ. ແລະ ຫຼັງຈາກນັ້ນຈະມີການຈັດງານໃນລະດັບສາກົນ ແລະ ເຫດການທີ່ກ່ຽວຂ້ອງທົ່ວໂລກຢູ່ໃນວາລະ. ກອງປະຊຸມສາກົນກ່ຽວກັບການສຶກສາຜູ້ໃຫຍ່ CONFINTEA ໂດຍ ອົງການ ຢູເນສໂກ ທີ່ຖືກຂຶ້ນໃນທຸກໆ 12 ຫາ 13 ປີ ເຊິ່ງຄັ້ງນີ້ຈະຈັດຢູ່ທີ່ປະເທດໂມຣັອກໂຄ.

ກ່ອນກອງປະຊຸມ CONFINTEA ໃນປີນີ້ ໄດ້ມີການຈັດປະຊຸມລະດັບພາກພື້ນ ແລະ ອະນຸພາກພື້ນຫຼາຍຄັ້ງ ເຊິ່ງໄດ້ລວບລວມຂໍ້ມູນທີ່ຈໍາເປັນຈາກທົ່ວໂລກ ເພື່ອເປັນບ່ອນອີງສໍາລັບການສຶກສາຜູ້ໃຫຍ່ໃນທົດສະວັດທີ່ຈະມາເຖິງ ແລະ ເພື່ອຫາລືວ່າການສຶກສາຜູ້ໃຫຍ່ສາມາດຈັດການແນວໃດກັບສິ່ງທ້າທາຍຕ່າງໆ ເຊັ່ນ: ການລະບາດໃຫຍ່ທົ່ວໂລກ, ການປ່ຽນແປງສະພາບດິນຟ້າອາກາດ, ຄວາມທ້າທາຍດ້ານປະຊາກອນ ແລະ ການແບ່ງແຍກທີ່ເພີ່ມຂຶ້ນລະຫວ່າງຄົນຮັ່ງມີ ແລະ ຄົນທຸກ ທັງພາຍໃນ ແລະ ລະຫວ່າງປະເທດ. ຫົວຂໍ້ໜຶ່ງທີ່ຈະໄດ້ຍົກມາປຶກສາຫາລືຢ່າງລະອຽດໃນກອງປະຊຸມ CONFINTEA ໃນປີໜ້າແມ່ນຫົວຂໍ້ການສຶກສາຂອງພົນລະເມືອງ. ການສົນທະນາກ່ຽວກັບການສົ່ງເສີມສ່ວນທີ່ສໍາຄັນຂອງການສຶກສາຜູ້ໃຫຍ່ນີ້ ສັນຍາວ່າຈະໄດ້ຮັບໝາກຜົນ ແລະ ມີຄວາມກ່ຽວຂ້ອງສູງ.

ຫວັງວ່າປີ 2022 ຈະເປັນປີທີ່ດີ ສໍາລັບການສຶກສາຜູ້ໃຫຍ່ ແລະ ນອກໂຮງຮຽນ ແລະ ການສຶກສາໂດຍທົ່ວໄປ ໂດຍສະເພາະໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້ຂອງພວກເຮົາ. ຂໍໃຫ້ໂຮງຮຽນກັບມາເປີດອີກຄັ້ງ ແລະ ມີໂອກາດໄດ້ຮຽນ ຮູ້ຫຼາຍໆ ແລະ ພວກເຮົາທຸກຄົນສາມາດມີສ່ວນຮ່ວມໄດ້.

ຂໍໃຫ້ທ່ານໂຊກດີ 2022!

ດ້ວຍຄວາມຮັກແພງ

*Johann Heilmann*

*ຜູ້ອໍານວຍການປະຈໍາພາກພື້ນ*

# ປົບເສັ້ນທາງສູ່ CONFINTEA: ການສົນທະນາບົດລາຍງານ GRALE ຂອງປະເທດໄທ

Johann Heilmann, DVV International

ຜູ້ປະຕິບັດງານ, ນັກຄົ້ນຄວ້າ, ນັກການເມືອງ ແລະ ຜູ້ສະໜັບສະໜູນການສຶກສາຜູ້ໃຫຍ່ທີ່ຕ້ອງການພື້ນທີ່ໃນການແລກປ່ຽນ - ໃນລະດັບສາກົນ. ເຫດການສຳຄັນນີ້ໄດ້ລວມມີບັນດາປະເທດສະມາຊິກຂອງອົງການ ຢູເນສໂກ, ຕົວແທນຈາກພາກສ່ວນອົງການຈັດຕັ້ງທາງສັງຄົມ, ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ແລະ ສະຖາບັນການຄົ້ນຄວ້າ ແມ່ນ CONFINTEA, ກອງປະຊຸມສາກົນກ່ຽວກັບການສຶກສາຜູ້ໃຫຍ່ທີ່ໄດ້ຈັດຂຶ້ນໃນທຸກໆ 12 ຫາ 13 ປີ ໂດຍອົງການຢູເນສໂກ. ນັບຕັ້ງແຕ່ CONFINTEA ຄັ້ງສຸດທ້າຍ ທີ່ເກີດຂຶ້ນຢູ່ເມືອງ ເບເລມ (Belem) ໃນປະເທດ ບຣາຊິນ ໃນປີ 2009, ບົດລາຍງານທີ່ເອີ້ນວ່າ GRALE (ບົດລາຍງາຍທົ່ວໂລກກ່ຽວກັບການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່) ໄດ້ຖືກຕີພິມ ໃນທຸກໆ 3 ປີ ເພື່ອເປັນການວັດແທກຜົນສຳເລັດ ແລະ ຄວາມກ້າວໜ້າຂອງການສຶກສາຜູ້ໃຫຍ່ໃນທົ່ວໂລກ. GRALE ສະບັບທີ 5 ຈະຖືກເປີດໂຕໃນປີ 2022 ເຊິ່ງຈະເປັນພື້ນຖານສຳລັບການສົນທະນາ ໃນກອງປະຊຸມ CONFINTEA ທີ່ຈະມາເຖິງ ທີ່ຈັດຂຶ້ນທີ່ປະເທດ ໂມຣັອກໂຄ ໃນເດືອນມິຖຸນາ ຂອງປີໜ້າ.

GRALE ໄດ້ຮັບແຈ້ງຈາກບົດລາຍງານລະດັບຊາດທີ່ມອບໃຫ້ແກ່ສະຖາບັນຢູເນສໂກເພື່ອການຮຽນຮູ້ຕະຫຼອດຊີວິດ (UIL) ໃນກາງປີ 2021. ບົດລາຍງານນີ້ລວມມີຂໍ້ມູນການສຳຫຼວດ, ການວິເຄາະນະໂຍບາຍ ແລະ ກໍລະນີສຶກສາທີ່ລວມທັງຄຳແນະນຳ ແລະ ການປະຕິບັດທີ່ດີ ແລະ ໂດຍປົກກະຕິຈະແມ່ນການປະກອບສ່ວນຈາກຜູ້ຕາງໜ້າຂອງກະຊວງສຶກສາທິການໃນແຕ່ລະປະເທດ. ເພື່ອປຶກສາຫາລືກ່ຽວກັບບົດລາຍງານລະດັບຊາດ ກັບບັນດາຕົວແທນຈາກສະຖາບັນຄົ້ນຄວ້າ, ຈາກພາກປະຊາສັງຄົມ, ພາກເອກະຊົນ, ມະຫາວິທະຍາໄລຈຸລາລົງກອນ ໃນບາງກອກ ໄດ້ເປັນເຈົ້າພາບຈັດກອງປະຊຸມກ່ຽວກັບຜົນຂອງບົດລາຍງານແຫ່ງຊາດໄທ ໂດຍໄດ້ຮັບທຶນສະໜັບສະໜູນຈາກ ດີວີວີ ອິນເຕີເນເຊິນແນວ ໃນກອງປະຊຸມໃຫຍ່ແບບອອນໄລ ກ່ຽວກັບການຮຽນຮູ້ຕະຫຼອດຊີວິດ. ທ່ານ ດຣ. ໂຍທິນ ສົມໂນນິມ ຈາກສຳນັກງານສົ່ງເສີມການສຶກສານອກລະບົບ ແລະ ການສຶກສາຕາມອັດທະຍາໃສ ຜູ້ປະສານງານລະດັບຊາດຂອງໄທ ໄດ້ນຳສະເໜີຜົນງານດ້ານການສຶກສາຜູ້ໃຫຍ່ ໃນປະເທດໄທເປັນຄັ້ງທຳອິດ. ທ່ານໄດ້ເນັ້ນໜັກເຖິງປະຫວັດສາດອັນຍາວນານຂອງຂະແໜງການສຶກສາທີ່ສຳຄັນ ແລະ ຍັງຊີ້ໃຫ້ເຫັນໂອກາດຕ່າງໆ ທີ່ລະບົບການສຶກສານອກໂຮງຮຽນຂອງໄທໄດ້ຈັດຫາໃຫ້ ໂດຍສະເພາະຜ່ານສູນການຮຽນຮູ້ຊຸມຊົນ (ສຮຊ) ທີ່ສ້າງຕັ້ງຂຶ້ນເປັນຢ່າງດີ ແລະ ສາມາດໃຊ້ເປັນຕົວແບບສຳລັບການພັດທະນາ ສຮຊ ໃນປະເທດອື່ນໆ ໃນອາຊີຕາເວັນອອກສ່ຽງໃຕ້ ໄດ້ເຊັ່ນດຽວກັນ.

ເຖິງຢ່າງໃດກໍຕາມ, ໃນລະຫວ່າງການສົນທະນາກັບຜູ້ຕາງໜ້າຈາກອົງການຈັດຕັ້ງທາງສັງຄົມ ມັນຍັງເຫັນໄດ້ຊັດເຈນວ່າ ກຸ່ມປະຊາກອນທັງໝົດຍັງບໍ່ທັນໄດ້ເຂົ້າຮ່ວມໃນລະບົບການສຶກສານອກໂຮງຮຽນຢ່າງສົມບູນ. ໂດຍສະເພາະ ຊົນເຜົ່າກຸ່ມນ້ອຍ, ແມ່ຍິງ, ເດັກນ້ອຍ ແລະ ກຸ່ມ LGBTIQ ກຸ່ມເຫຼົ່ານີ້ຍັງຂາດການສະໜອງການສຶກສາທີ່ເໝາະສົມ ແລະ ສະຖານະພາບຂອງຂອງເຂົາເຈົ້າໃນການເຂົ້າເຖິງການສຶກສາແມ່ນໜັກຂຶ້ນຢ່າງຊັດເຈນໃນຊ່ວງທີ່ມີການລະບາດໃຫຍ່ ດັ່ງທີ່ທ່ານ ມັກສາ ອິນພອນ ຈາກອົງການໄທແສງສັນອະນາຄົດເຍົາວະຊົນ ໃນຈັງຫວັດຊຽງໃໝ່ ທີ່ເຮັດວຽກໂດຍກົງກັບກຸ່ມທີ່ມີຄວາມສ່ຽງ ໄດ້ອະທິບາຍໄວ້.

Cecilia Soriano ຈາກສະມາຄົມ ASPBAE (ສະມາຄົມອາຊີ-ປາຊີຟິກເພື່ອການສຶກສາຂັ້ນພື້ນຖານ ແລະ ການສຶກສາຜູ້ໃຫຍ່) ຄູ່ຮ່ວມພັດທະນາທີ່ຍາວນານຂອງ ດີວີວີ ອິນເຕີເນເຊິນແນວ ໄດ້ອະທິບາຍກ່ຽວກັບວຽກງານການການສະໜັບສະໜູນ ການດຳເນີນການຕາມຂະບວນການ CONFINTEA, ເຊິ່ງຈະເຮັດໃຫ້ຕົວແທນພາກປະຊາສັງຄົມໃນດ້ານການສຶກສາຜູ້ໃຫຍ່ໃຫ້ເຂັ້ມແຂງ. Cecilia ໄດ້ຍົກປະເດັນຂອງລາວ ໂດຍກ່າວວ່າ ການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່ທີ່ມີອົງປະກອບຂອງການຮຽນຮູ້ໃນໂຮງຮຽນ, ການຮຽນຮູ້ນອກໂຮງຮຽນ ແລະ ການຮຽນຮູ້ຕາມອັດທະຍາໃສ, ສາມາດຕອບສະໜອງຄວາມຕ້ອງການດ້ານການຮຽນຮູ້ຂອງກຸ່ມທີ່ມີຄວາມສ່ຽງ ແລະ ກຸ່ມດ້ອຍໂອກາດ ເພື່ອຈັດການກັບປັນຫາ




*From the Presentation of Angela Owusu-Boampong*

ຄວາມບໍ່ເທົ່າທຽມ, ການເລືອກປະຕິບັດ ແລະ ການກີດກັນ ແລະ ເພື່ອໃຫ້ແນ່ໃຈວ່າ "ບໍ່ໃຜມີຖືກປະປ່ອຍໄວ້ຢູ່ທາງຫຼັງ". ດັ່ງນັ້ນຈຶ່ງຕ້ອງໃຫ້ໝັ້ນໃຈວ່າການດໍາເນີນການຕາມເປົ້າໝາຍການພັດທະນາແບບຍືນຍົງ (SDGs) ສະແດງໃຫ້ເຫັນການມີສ່ວນຮ່ວມຂອງພາກລັດ ແລະ ສັງຄົມ ເພື່ອໃຫ້ SDGs ກາຍເປັນການເຄື່ອນໄຫວທາງສັງຄົມ- ລັດຖະບານໃນຖານະເປັນຜູ້ປະຕິບັດໜ້າທີ່ຫຼັກຕາມແນວທາງ ທັງຂອງ `ລັດຖະບານ' ແລະ `ທົ່ວສັງຄົມ'.

ໃນວາລະກອງປະຊຸມດັ່ງກ່າວໄດ້ຈັດໃຫ້ມີພື້ນທີ່ສໍາລັບການຫາຊ່ຽວຊານຈາກພາກເອກະຊົນ: ທ່ານ ນັດຕະສັກ ໂຣດຈະນະພິເຊດ ທີ່ປຶກສາຄະນະກໍາມະການບໍລິສັດ Elernity Thailand, ບໍລິສັດເທັກໂນໂລຊີສາທິດ ໄດ້ສະແດງໃຫ້ເຫັນວ່າເຄື່ອງມືອອນໄລ ສາມາດຊ່ວຍປັບປຸງມາດຕະຖານການຮຽນທາງໄກໄດ້. ຈະເຫັນໄດ້ໃນອະນາຄົດວ່າເຄື່ອງມືອອນໄລ ສາມາດເປັນປະໂຫຍດຕໍ່ຊຸມຊົນດ້ອຍໂອກາດ, ແຕ່ໃນກໍລະນີໃດກໍຕາມ, ວິທີການເຫຼົ່ານີ້ແມ່ນວິທີການທີ່ບັນດາຜູ້ມີສ່ວນກ່ຽວຂ້ອງໃນການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່ ຄວນເອົາໃຈໃສ່ເພື່ອໃຫ້ປະໂຫຍດຈາກນະວັດຕະກໍາເຫຼົ່ານີ້.

ໂດຍລວມແລ້ວ, ວາລະກ່ຽວກັບສະຖານະພາບການສຶກສາຜູ້ໃຫຍ່ໃນປະເທດໄທ ແລະ ບົດລາຍງານແຫ່ງຊາດ GRALE ພິສູດແລ້ວວ່າມັນມີຄວາມໝາຍຫຼາຍ ແລະ ຈະເປັນເຫດການທີ່ນໍາມາດ້ວຍການປຶກສາຫາລືໃນລະດັບຊາດ ແລະ ໃນພາກພື້ນ ເພື່ອກະກຽມຄວາມພ້ອມຂອງພາກສ່ວນກ່ຽວຂ້ອງທັງໝົດເພື່ອການມີສ່ວນຮ່ວມໃນກອງປະຊຸມ CONFINTEA ໃນປີໜ້າ.

# ສ້າງຄວາມເຂັ້ມແຂງໃຫ້ແກ່ສູນພັດທະນາການສອກສານອກໂຮງຮຽນ

*ສົມຈິດ ພອນວິໄລ*, NFEDC

ການພັດທະນາຊັບພະຍາກອນມະນຸດແມ່ນມີຄວາມສໍາຄັນຫຼາຍສໍາລັບທຸກອົງກອນ ບໍ່ວ່າຈະເປັນພາກລັດ ຫຼື ເອກະຊົນ, ນັ້ນແມ່ນເຫດຜົນທີ່ຄວນຊຸກຍູ້ ແລະ ສະໜັບສະໜູນ. ສະນັ້ນ, ສູນພັດທະນາການສຶກສານອກໂຮງຮຽນ (ສພນ) ຈຶ່ງມີບົດບາດສໍາຄັນໃນການພັດທະນາບຸກຄະລາກອນທັງໝົດໃນລະບົບການສຶກສານອກໂຮງຮຽນ (ກສນ) ໃນເຂດພາກກາງ ແລະ ທົ່ວປະເທດ ພາຍໃຕ້ການຊີ້ນໍາຂອງກົມການສຶກສານອກໂຮງຮຽນ.

ທີ່ຜ່ານມາ, ສພນ ໄດ້ດໍາເນີນການຝຶກອົບຮົມທັກສະຕ່າງໆ ໃຫ້ແກ່ພະນັກງານ ກສນ ໃນຫົວຂໍ້ຕ່າງໆ ລວມທັງບົດບາດຍິງ-ຊາຍ, ທັກສະສັງຄົມ ແລະ ອື່ນໆ. ໃນແຜນຍຸດທະສາດຂອງ ດີວີວີ ອິນເຕີເນເຊີນແນວ ໄດ້ມຸ່ງຫວັງໃນການເສີມສ້າງຂີດຄວາມສາມາດຂອງ ສພນ ໂດຍລວມ. ໃນປີ 2022, ຜູ້ຊ່ຽວຊານຈະຖືກເຊີນມາໃຫ້ຄໍາປຶກສາ ສພນ ບົນພື້ນຖານຂອງ Curriculum institutionALE ເຊິ່ງເປັນຫຼັກສູດທີ່ຈະສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນການສຶກສາຜູ້ໃຫຍ່ໂດຍລວມ. ໃນເບື້ອງຕົ້ນມັນໄດ້ຖືກພັດທະນາໂດຍພະນັກງານຂອງດີວີວີ ໃນຕາເວັນອອກກາງ ແລະ ປະຈຸບັນນີ້ໄດ້ຖືກແປເປັນພາສາລາວໂດຍ ສພນ. ເຊິ່ງໄດ້ສຸມໃສ່ຫົວຂໍ້ເຊັ່ນ:

1. ທ່າແຮງ ແລະ ການບໍລິການຕົ້ນຕໍຂອງສະຖາບັນການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່
2. ການມີສ່ວນຮ່ວມ, ເປົ້າໝາຍ, ຍຸດທະສາດ ແລະ ການຄຸ້ມຄອງ
3. ການປະເມີນຄວາມຕ້ອງການຂອງກຸ່ມເປົ້າໝາຍ
4. ການຕະຫຼາດ
5. ການເຂົ້າເຖິງ ແລະ ການມີສ່ວນຮ່ວມ
6. ການຮ່ວມມືກັບວິທະຍາກອນຜູ້ຊົງຄຸນນະວຸດ
7. ການສ້າງເຄືອຂ່າຍ ແລະ ການເປັນຄູ່ຮ່ວມພັດທະນາ
8. ການສ້າງສະພາບແວດລ້ອມການຮຽນຮູ້
9. ການລະດົມທຶນ

ໃນປີທີ່ຜ່ານມາ ສພນ ຮ່ວມກັບທີ່ປຶກສາຈາກພາຍນອກ ໄດ້ເຮັດການວິໄຈກ່ຽວກັບຄວາມເປັນໄປໄດ້ໂດຍໃຊ້ເຄື່ອງມືອອນໄລໃນການສຶກສານອກໂຮງຮຽນ. ໃນຫຼາຍລະດັບ ກິດຈະກໍາຕ້ອງໄດ້ຮັບກາຍອອກແບບໃໝ່ ຫຼື ເລື່ອນອອກໄປເນື່ອງຈາກການລະບາດຂອງໂຄວິດ-19. ເຖິງຢ່າງໃດກໍຕາມ, ສພນ ຍັງໄດ້ຜະລິດຫຼາຍວິດີໂອ ທີ່ສໍາຄັນ ທີ່ສາມາດເຜີຍແຜ່ໂດຍໂຄງສ້າງຂອງລະບົບ ກສນ ແລະ ຕອບສະໜອງຄວາມຕ້ອງການອັນເລັ່ງດ່ວນຂອງກຸ່ມເປົ້າໝາຍໃນເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ ເຊິ່ງວິດີໂອປະກອບດ້ວຍ:
1. ການນໍາໃຊ້ Zoom ເພື່ອການປະຊຸມອອນໄລ, 2. 10 ວິທີ ປ້ອງກັນໂຕເອງຈາກໂຄວິດ-19, 3. ການເຮັດແຊນວິສ, 4. ການໃຫ້ຄໍາແນະນໍາຜູ້ປົກຄອງ ທີ່ຕ້ອງການສະໜັບສະໜູນເດັກນ້ອຍໃນການຮຽນອອນໄລ, ວິດີໂອວິຊາຄະນິດສາດ ແລະ ພາສາລາວສໍາລັບຫຼັກສູດທຽບເທົ່າຊັ້ນມັດທະຍົມປີທີ 7.

ສໍາລັບລາຍລະອຽດເພີ່ມເຕີມເບິ່ງໄດ້ທີ່:
- Website: https://nfedi.org/
- Facebook page: https://www.facebook.com/nfedc
- YouTube: ສູນພັດທະນາການສຶກສານອກໂຮງຮຽນ

# ການສອດແຊກເນື້ອໃນການຮຽນຮູ້ຕະຫຼອດຊີວິດເຂົ້າໃນຫຼັກສູດການສຶກສາຄູ ຢູ່ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ

*ສຸກສາຄອນ ແສງສຸລິຍາ*
ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດລາວ



*ສຸກສາຄອນ ແສງສຸລິຍາ*
*ນັກຮຽນ ປະລິນຍາເອກ ແລະ ອາຈານສອນ*
*ທີ່ຄະນະ ຄສສ ມຊ*

ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ (ຄສສ ມຊ) ໄດ້ລິເລີ່ມການຮ່ວມມືເພື່ອສົ່ງເສີມວຽກງານການສຶກສາຮ່ວມກັບຫ້ອງການນາໆຊາດເພື່ອການສຶກສາຜູ້ໃຫຍ່ເຢຍລະມັນ (DVVI) ປະຈໍາລາວ ນັບຕັ້ງແຕ່ ເດືອນທັນວາ ປີ 2016 ເປັນຕົ້ນມາ. ຈາກການສົນທະນາ ແລະ ປຶກສາຫາລືກັນ ສອງຝ່າຍ ລະຫວ່າງ ຄສສ ມຊ ແລະ ຫ້ອງການ DVVI, ຈຶ່ງເກີດມີແນວຄິດລິເລີ່ມກ່ຽວກັບການຜັນຂະຫຍາຍແນວຄິດການຮຽນຮູ້ຕະຫຼອດຊີວິດເຂົ້າໃນ ສະຖາບັນການສຶກສາຄູ. ໃນເວລານັ້ນ, ຕາງໜ້າທັງສອງຝ່າຍສໍາລັບການສົນທະນາ ປະກອບມີທ່ານ ຮສ.ປອ. ອາທິດອຸໄທ ຈະຕຸພອນໄຊ (ອາດີດຄະນະບໍດີ) ໃນນາມຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ແລະ ທ່ານ Uwe Gartenschlaeger (ອາດີດຜູ້ອໍານວຍການຫ້ອງການ DVVI). ພາຍຫຼັງການປຶກສາຫາລືສອງຝ່າຍ, ຄສສ ມຊ ຈຶ່ງໄດ້ລະດົມພາກສ່ວນທີ່ກ່ຽວຂ້ອງ ແລະ ນັກວິຊາການພາຍໃນ ຄະນະສຶກສາສາດ ເພື່ອຄົ້ນຄວ້າ, ວາງແຜນ ແລະ ກໍານົດວິທີການປະຕິບັດສໍາລັບການຜັນຂະຫຍາຍແນວຄິດການຮຽນຮູ້ຕະຫຼອດຊີວິດ ພາຍໃຕ້ການຊີ້ນໍາຂອງ ຄະນະນໍາ ຄະນະສຶກສາສາດ.

ຄວາມຈິງແລ້ວ, ການທີ່ຈະປັບປຸງ ຫຼື ດັດປັບເນື້ອໃນຫຼັກສູດໃນລະບົບການສຶກສາລາວເປັນເລື່ອງທີ່ບໍ່ງ່າຍ, ແຕ່ ຄສສ ມຊ ກໍ່ໄດ້ສູ້ຊົນ ແລະ ພະຍາຍາມຢ່າງສຸດຂີດ, ໂດຍເລີ່ມຈາກການສະເໜີແຜນ ແລະ ຂໍທິດຊີ້ນໍາສໍາລັບການສອດແຊກແນວຄິດການຮຽນຮູ້ຕະຫຼອດຊີວິດເຂົ້າໃນຫຼັກສູດຈາກຂັ້ນເທິງຕາມລໍາດັບໃນການຈັດຕັ້ງປະຕິບັດ. ຢູ່ໃນບົດສະເໜີດັ່ງກ່າວ, ຄສສ ມຊ ໄດ້ອີງໃສ່ຄວາມເປັນໄປໄດ້ ແລະ ເຫດຜົນຫຼາຍໆຢ່າງ ເຊັ່ນ: (1) ເປົ້າໝາຍການພັດທະນາແບບຍືນຍົງຂອງ UNESCO, ໂດຍສະເພາະ ເປົ້າໝາຍທີ 4, ທີ່ກ່າວເຖິງການຮັບປະກັນການສຶກສາໃຫ້ມີຄຸນນະພາບ, ເທົ່າທຽມກັນ ແລະ ທົ່ວເຖິງ, ສົ່ງເສີມກາລະໂອກາດໃນການຮຽນຮູ້ຕະຫຼອດຊີວິດສໍາລັບທຸກຄົນ (UNESCO, 2015); (2) ວິໄສທັດ ຮອດປີ 2030, ທີ່ລະບຸວ່າ ສປປ ລາວ ຕ້ອງຫຼຸດຜ່ອນຄວາມບໍ່ຮູ້ໜັງສືໃຫ້ກັບປະຊາຊົນບັນດາເຜົ່າ ດ້ວຍການສົ່ງເສີມການຮຽນຮູ້ຕະຫຼອດຊີວິດເພື່ອເຮັດໃຫ້ຊີວິດການເປັນຢູ່ດີຂຶ້ນ (ກະຊວງສຶກສາທິການ ແລະ ກິລາ, 2016); (3) ກົດໝາຍການສຶກສາຂອງ ສປປ ລາວ, ມາດຕາ 26, ທີ່ລະບຸວ່າການຮຽນຮູ້ຕະຫຼອດຊີວິດການຮຽນຮູ້ຕະຫຼອດຊີວິດ ແມ່ນການປະສົມປະສານລະຫວ່າງການສຶກສາໃນໂຮງຮຽນ ແລະ ນອກໂຮງຮຽນ ເພື່ອສົ່ງເສີມໃຫ້ທຸກຄົນທັງຍິງ ແລະ ຊາຍໄດ້ຮັບການຮຽນຮູ້ຕະຫຼອດຊີວິດ ເພື່ອສ້າງສັງຄົມພູມປັນຍາຕາມຄວາມຮຽກຮ້ອງຕ້ອງການຂອງການພັດທະນາ (ກະຊວງສຶກສາທິການ ແລະ ກິລາ, 2015); ແລະ (4) ນິຕິກໍາວິຊາການມະຫາວິທະຍາໄລແຫ່ງຊາດ ວ່າດ້ວຍການປັບປຸງເນື້ອໃນລາຍວິຊາໃນແຕ່ລະສົກສຶກສາ ທີ່ລະບຸວ່າ ສາມາດປັບປ່ຽນເນື້ອໃນໄດ້ ບໍ່ເກີນ 25% (ມະຫາວິທະຍາໄລແຫ່ງຊາດ, 2015). ໃນທີ່ສຸດ, ຄສສ ມຊ ກໍ່ໄດ້ຮັບການອະນຸມັດ ແລະ ເຫັນດີໃຫ້ມີການສອດແຊກແນວຄິດການຮຽນຮູ້ຕະຫຼອດຊີວິດເຂົ້າໃນຫຼັກສູດ. ຄສສ ມຊ ໄດ້ລິເລີ່ມຈາກການຈັດກອງປະຊຸມວິຊາການ ແລະ ເຊື້ອເຊີນບັນດານັກວິຊາການ ແລະ ຄູ-ອາຈານທົ່ວຄະນະສຶກສາສາດເພື່ອມາຮ່ວມຂຽນເນື້ອໃນການຮຽນຮູ້ຕະຫຼອດຊີວິດ, ແລະຈາກນັ້ນກໍ່ໄດ້ຈັດໃຫ້ເປັນເນື້ອໃນບົດຮຽນກ່ຽວກັບການຮຽນຮູ້ຕະຫຼອດຊີວິດ ທີ່ຖືກບັນຈຸຢູ່ໃນພາກໜຶ່ງຂອງວິຊາ "ສິ່ງແວດລ້ອມ ແລະ ເທັກໂນໂລຊີໃນຊີວິດປະຈໍາວັນ". ພາຍຫຼັງສໍາເລັດຂະບວນການຕ່າງເຫຼົ່ານີ້, ຄສສ ມຊ ກໍ່ໄດ້ເລີ່ມການຈັດຕັ້ງການຮຽນ-ການສອນເນື້ອໃນການຮຽນຮູ້ຕະຫຼອດຊີວິດ ຢູ່ໃນສົກສຶກສາ 2018-2019 ເປັນຕົ້ນມາ. ໃນການຈັດຕັ້ງປະຕິບັດດັ່ງກ່າວ, ແມ່ນໄດ້ເລີ່ມ



ຈັດການຮຽນ-ການສອນ, ໂດຍກຳນົດໄລຍະເວລາການຮຽນ ແມ່ນ 16 ຊົ່ວໂມງສຳລັບເນື້ອໃນທັງໝົດ ແລະ ຖືກຈັດຕັ້ງປະຕິບັດເປັນລັກສະນະທົດລອງ (ແຕ່ນຳໃຊ້ສອນຈິງໂດຍອາຈານສອນ) ເປັນເວລາ 1 ສົກຮຽນ. ໃນສົກຮຽນຕໍ່ມາ, ຄສສ ມຊ ກໍ່ໄດ້ມີການປະເມີນຜົນ, ຖອດຖອນບົດຮຽນ, ແລະ ມີການປັບປຸງເນື້ອໃນການຮຽນຮູ້ຕະຫຼອດຊີວິດດັ່ງກ່າວໃຫ້ມີຄວາມເໝາະສົມ ແລະ ມີຄວາມສອດຄ່ອງຫຼາຍຂຶ້ນ. ໃນປະຈຸບັນ, ຄສສ ມຊ ໄດ້ດຳເນີນການຈັດຕັ້ງການຮຽນ-ການສອນເນື້ອໃນການຮຽນຮູ້ຕະຫຼອດຊີວິດ ຢູ່ໃນທຸກໆສາຂາວິຊາວິຄູ, ລວມທັງໝົດ 12ສາຂາ ທົ່ວຄະນະສຶກສາສາດ. ຈາກຜົນການປະເມີນຄວາມຕ້ອງການທາງການຮຽນ, ສະແດງໃຫ້ເຫັນວ່າ ຜູ້ຮຽນສະແດງການຕອບຮັບ ແລະ ເຫັນໄດ້ເຖິງຄຸນປະໂຫຍດຂອງການຮຽນຮູ້ຕະຫຼອດຊີວິດ. ສະນັ້ນ, ຄສສ ມຊ ຈຶ່ງໄດ້ດຳເນີນການສືບຕໍ່ພັດທະນາໃຫ້ເນື້ອໃນການຮຽນຮູ້ຕະຫຼອດຊີວິດມາເປັນວິຊາການຮຽນຮູ້ຕະຫຼອດຊີວິດຢ່າງເຕັມຕົວແລະ ຈະຖືກນຳໃຊ້ເຂົ້າໃນຫຼັກສູດສ້າງຄູ ລະດັບປະລິນຍາຕີ ແລະ ປະລິນຍາໂທ ໃນຄະນະສຶກສາສາດ, ເຊິ່ງໃນປະຈຸບັນນີ້ ແມ່ນກຳລັງຢູ່ໃນຂັ້ນຕອນການດຳເນີນ ແລະ ຄາດວ່າຈະສຳເລັດໃນໄວໆນີ້. ຈາກທີ່ໄດ້ກ່າວມາຂ້າງເທິງນັ້ນສາມາດສະຫຼຸບ ໄດ້ວ່າ ຄສສ ມຊ ໄດ້ປະສົບຜົນສຳເລັດອັນຍິ່ງໃຫ່ຍ ໃນການຜັນຂະຫຍາຍແນວຄິດການຮຽນຮູ້ຕະຫຼອດຊີວິດເຂົ້າໃນຫຼັກສູດສ້າງຄູຂອງຄະນະສຶກສາສາດ ແລະ ເປັນທ່າແຮງອັນໜຶ່ງທີ່ສຳຄັນສຳລັບບາດກ້າວຕໍ່ໄປໃນການສົ່ງເສີມແນວຄິດການຮຽນຮູ້ຕະຫຼອດຊີວິດ ຢູ່ໃນເຄືອຂ່າຍສະຖານການສຶກສາ ແລະ ຂະແໜງການຕ່າງໆທີ່ກ່ຽວຂ້ອງ.

ທາງ ສ່ວນຮ່ວມ ເຢຍລະມັນ

vhs DVV International

ປຶ້ມຄູ່ມືຄູຝຶກ

ທັກສະທາງສັງຄົມ




ຄະນະສຶກສາສາດ ມຊ

2021

### ຫົວຂໍ້ໃນລາຍວິຊາ

- ການສຶກສາເພື່ອການພັດທະນາແບບຍືນຍົງ
- ການຮຽນຮູ້ຕະຫຼອດຊີວິດ
- ຈຸດປະສົງຂອງການຮຽນຮູ້ຕະຫຼອດຊີວິດ
- ຮູບແບບ ຂອງການຮຽນຮູ້ຕະຫຼອດຊີວິດ
- ການຮຽນຮູ້ດ້ວຍຕົນເອງ
- ທັກສະສັງຄົມ

# ບົດເພງໃນການຮຽນຮູ້ຕະຫຼອດຊີວິດພິຊິດຄວາມສຳເລັດການຮ່ວມມື

*ໄພວອນ ນັນທະວົງ Phaivone Nanthạvong*
ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດລາວ



Phaivone Nanthavong
a teacher at the
FED-NUoL

ໃນຍຸກແຫ່ງໂລກາພິວັດ ການສຶກສາເປັນປັດໄຈໜຶ່ງທີ່ສຳຄັນຕໍ່ການສ້າງສາພັດທະນາປະເທດຊາດ. ແນ່ນອນບ່ອນໃດທີ່ມີການສຶກສາບ່ອນນັ້ນກໍ່ຈະເປັນສູນລວມແຫ່ງການເຕົ້າໂຮມບັນດານັກຮຽນຮູ້ປັນຍາຊົນ. ໃນທາມກາງທີ່ ສປປ.ລາວ ຂອງພວກເຮົາກຳລັງສຸມໃສ່ໃນການພັດທະນາປະເທດຕາມເປົ້າໝາຍການພັດທະນາແບບຍືນຍົງ ແລະ ເປົ້າໝາຍສະຫັດສະວັດດ້ານການພັດທະນາ (Millennium Development Goal-MDG); ການສຶກສາຍິ່ງມີຄວາມຈຳເປັນ ແລະ ສຳຄັນຢ່າງໃຫຍ່ຫຼວງທີ່ຈະນຳພາຊາດຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາ.

ເພື່ອໃຫ້ບັນລຸຕາມເປົ້າໝາຍການພັດທະນາແບບຍືນຍົງ (SDGs) ໂດຍສະເພາະໃນເປົ້າໝາຍທີ 4 (Quality Education) ວ່າດ້ວຍການສຶກສາທີ່ມີຄຸນນະພາບ ເປັນຕົ້ນແມ່ນຮັບປະກັນການສຶກສາໃຫ້ມີຄຸນນະພາບ, ເທົ່າທຽມກັນ ແລະ ທົ່ວເຖິງ; ສົ່ງເສີມກາລະໂອກາດໃນການຮຽນຮູ້ຕະຫຼອດຊີວິດສຳລັບໝົດທຸກຄົນ ແລະ ທັງເປັນການພັດທະນາອົງປະກອບ ທີ່ສຳຄັນຂອງດຳລັດວ່າດ້ວຍການຮຽນຮູ້ຕະຫຼອດຊີວິດໂດຍການແຊກຊ້ອນເນື້ອໃນການຮຽນຮູ້ຕະຫຼອດຊີວິດເຂົ້າໃນການສຶກສາຄູ, ດັ່ງນັ້ນ ຄະນະສຶກສາສາດ ແລະ ອົງການ DVV International, ຕາງໜ້າໂດຍຫ້ອງການປະຈຳພາກພື້ນປະຈຳ ສປປ ລາວ ຈຶ່ງເຫັນດີຕົກລົງກັນຈັດຕັ້ງໂຄງການຝຶກອົບຮົມການປະພັນເພງຂຶ້ນ ໃນຫົວຂໍ້: "ບົດເພງກັບການຮຽນຮູ້ຕະຫຼອດຊີວິດ" ໂຄງການ ດັ່ງກ່າວ ປະກອບມີ 2 ຈຸດປະສົງຫຼັກຄື: (1) ເພື່ອເປີດໂອກາດໃຫ້ກັບນັກສຶກສາ ມະຫາວິທະຍາໄລແຫ່ງຊາດຮັບຟັງການບັນຍາຍ ແລະ ຮຽນຮູ້ຫຼັກການພື້ນຖານ ແລະ ຄວາມເຂົ້າໃຈກ່ຽວກັບຂະບວນການຂຽນ ຫຼື ການປະພັນບົດເພງ; (2) ເພື່ອເປີດໂອກາດໃຫ້ນັກສຶກສາ ມະຫາວິທະຍາໄລແຫ່ງຊາດ ຂຽນ ຫຼື ປະພັນບົດເພງໃດໜຶ່ງກ່ຽວກັບການຮຽນຮູ້ຕະຫຼອດຊີວິດ ແລະ ສົ່ງບົດເພງເຂົ້າແຂ່ງຂັນຊິງລາງວັນ. ອີກໜຶ່ງຄວາມຄາດຫວັງຂອງໂຄງການກໍ່ຄື ແນໃສ່ການສົ່ງເສີມໂອກາດສຳລັບການຮຽນຮູ້ຕະຫຼອດຊິດໃຫ້ກັບນັກສຶກສາ ເພື່ອໃຫ້ເຂົາເຈົ້າມີທັກສະເພີ່ມເຕີມ ແລະ ອາດສາມາດປະກອບອາຊີບການແຕ່ງເພງໄດ້ ນອກຈາກອາຊີບຫຼັກ, ເພາະວ່າບົດເພງ ກໍ່ເປັນສ່ວນໜຶ່ງໃນຊີວິດ, ເປັນອາຫານທາງຈິດໃຈ ເປັນສິ່ງກະຕຸ້ນໃຫ້ເກີດມີອາລົມມ່ວນຊື່ນ ຫຼື ໂສກເສົ້າ. ດັ່ງນັ້ນ, ເຮົາສັງເກດເຫັນວ່າບົດເພງຈະຕິດພັນກັບການດຳລົງຊີວິດຂອງຄົນເຮົາທຸກໆ ຄົນ ເພາະວ່າເພງໝາຍເຖິງວາດ ຫຼື ຈັງຫວະທຳນອງສຽງຂັບລຳຂອງຄົນ ຫຼື ເຄື່ອງດົນຕີ ທັງສຽງຄົນ ແລະ ສຽງດົນຕີປະກອບເຂົ້າກັນພາໃຫ້ເກີດຄວາມຮູ້ສຶກ, ອາລົມຕ່າງໆເຊັ່ນ: ອອນຊອນ, ມ່ວນຊື່ນ, ຕື່ນເຕັ້ນ ຫຼື ໂສກເສົ້າອາວອນ... (ປັນຍາ ພັນທະພານິດ, 2019, ໜ້າ. 26).

ຄະນະປະທານໂຄງການໃນຄັ້ງນີ້ ປະກອບມີ: ທ່ານ ອຈ. ປທ. ວິຊຽນ ທອງທະວີ, ຮອງຄະນະບໍດີ ຄະນະສຶກສາສາດ ມຊ, ແລະ ທ່ານ ປອ. ໂຢຮັນ ຣາຍມັນ, ຜູ້ອຳນວຍການໃຫຍ່, ພ້ອມດ້ວຍທ່ານ ຂັນທອງ ອິນທະຈັກ, ຜູ້ປະສານງານ



| ລຳດັບ | ຊື່ບົດເພງ | ຊື່ ຜູ້ປະກວດ | ສາຂາຮຽນ | ປີຮຽນ |
|---|---|---|---|---|
| 1 | "ຈົດຈຳຄຳແມ່" | ທ້າວ ໄມ ພິມມະສອນ | ບໍລິຫານການສຶກສາ | 3 |
| 2 | "ຈາກບ້ານເພື່ອການສຶກສາ" | ທ້າວ ພິງສະຫວັນ ຄຸດາພອນ | ບໍລິຫານການສຶກສາ | 3 |
| 2 | "ພູມໃຈໃນຄວາມເປັນຄູ" | ທ້າວ ບຸນ ມາລີສີທອນ | ປະຫວັດສາດ | 2 |
| 3 | "ຮຽນຮູ້ຕະຫຼອດໄປ" | ນາງ ສຸກສະຫວັນ ຈິດຕະວົງໄສ | ພາສາລາວ-ວັນນະຄະດີ | 3 |
| 3 | "ຈຳຈາກບ້ານນາ" | ນາງ ໄໝຄຳ ຜາສຸກ | ພາສາລາວ-ວັນນະຄະດີ | 3 |

ຈາກຫ້ອງການປະຈຳພາກພື້ນ. ສຳລັບໂຄງການນີ້, ໃຫ້ກຽດເຂົ້າຮ່ວມ ແລະ ເປັນນັກວິທະຍາກອນຫຼັກ ໂດຍທ່ານ ບົວເງິນ ຊາວພູວົງ, ຮອງລັດຖະມົນກະຊວງຖະແຫຼງຂ່າວ ວັດທະນະທຳ ແລະ ການທ່ອງທ່ຽວ. ໃນໂຄງການຝຶກອົບຮົມການປະພັນເພງຄັ້ງນີ້, ວິທະຍາກອນຮັບເຊີນ ໄດ້ນຳສະເໜີກ່ຽວກັບສະພາບລວມການຂະຫຍາຍຕົວຂອງບົດເພງ ແລະ ແນວທາງອັນລ້ຳຄ່າກ່ຽວກັບການປະພັນເພງ. ເມື່ອມີຜູ້ທີ່ມີຄວາມຮູ້ຄວາມສາມາດ, ປຸ່ງມລົ້ນປະສົບການຄືແນວນີ້ ແນ່ນອນບັນດາຄູອາຈານ ແລະ ນັກສຶກສາຕ່າງກໍສົນໃຈ, ເຂົ້າຮ່ວມຮັບຟັງ ແລະ ຮຽນຮູ້ເປັນຈຳນວນຫຼາຍ, ເຊິ່ງມີຄູ-ອາຈານ, ນັກສຶກສາ ເຂົ້າຮ່ວມທັງໝົດ 95 ຄົນ (ຍິງ 45 ຄົນ) ເຊິ່ງເຫັນວ່າລື່ນຈາກຄາດໝາຍທີ່ວາງໄວ້. ໂຄງການດັ່ງກ່າວແມ່ນຖືກແບ່ງອອກເປັນ 3 ໄລຍະ (ພິທີເປີດ-ດຳເນີນການຝຶກອົບຮົມ, ຮັບເນື້ອເພງ ຫຼື ບົດເພງທີ່ຖືກສົ່ງເຂົ້າແຂ່ງຂັນຈາກນັກສຶກສາ-ຄັດເລືອກ, ແລະ ພິທີສະຫຼຸບ-ປະກາດຜົນການແຂ່ງຂັນ). ພິທີເປີດ ແມ່ນໄດ້ຖືກໄຂຂຶ້ນໃນວັນທີ 02 ເມສາ 2021, ແຕ່ຍ້ອນສະພາບໂຄວິດ ໂຄງການຈຶ່ງໄດ້ແກ່ຍາວເວລາ ແລະ ໄດ້ເລື່ອນໄລຍະທັງສອງທີ່ເຫຼືອອອກໄປ (ເພື່ອຕິດຕາມສະຖານະການໂຄວິດ ແລະ ຈັດຫາເວລາທີ່ເໝາະສົມ) ຈົນມາຮອດເດືອນ ກໍລະກົດ ປີ 2021 ຈຶ່ງສາມາດສືບຕໍ່ດຳເນີນການຄັດເລືອກເນື້ອເພງ ແລະ ໃນທີ່ສຸດ ພິທີສະຫຼຸບກໍ່ໄດ້ຖືກຈັດຂຶ້ນ ແລະ ສຳເລັດລົງ ໃນວັນ ທີ 23 ສິງຫາ 2021. ຜ່ານການຄັດເລືອກທາງວິຊາການຂອງຄະນະກຳມະການ ຜົນການແຂ່ງຂັນ ສາມາດສະຫຼຸບຜູ້ໄດ້ຮັບລາງວັນຕ່າງໆໄດ້ຄື: ລາງວັນຊະນະເລີດ ມີ 1 ລາງວັນ, ຮອງຊະນະເລີດອັນດັບ 2 ມີ 2 ລາງວັນ, ຮອງຊະນະເລີດອັນດັບ 3 ມີ 3 ລາງວັນ, ແລະ ລາງວັນຊົມເຊີຍ ມີ 6 ລາງວັນ, ດັ່ງໃນຕາຕະລາງ:

ບົດເພງຈຳນວນທັງໝົດ 6 ບົດເພງຂ້າງເທິງນັ້ນ ແມ່ນໄດ້ຖືກຄັດເລືອກ ແລະ ໄດ້ຮັບລາງວັນປະເພດຕ່າງໆ ຕາມຄວາມເໝາະສົມ. ຄະນະກຳມະການໄດ້ອີງໃສ່ເງື່ອນໄຂ ແລະ ມາດຖານສຳຄັນໃນການຄັດເລືອກຫຼາຍໆດ້ານ, ເປັນຕົ້ນແມ່ນ ບົດເພງທີ່ມີເນື້ອໃນສ້າງສັນ, ສື່ສານເຖິງແນວຄິດການຮຽນຮູ້ຕະຫຼອດຊີວິດ, ການສຶກສາ, ມີການໃຊ້ຈັງຫວະທຳນອງ, ສັບສຳນວນພາສາຖືກຕ້ອງເໝາະສົມ, ເປັນຜົນງານຂອງນັກສຶກສາແທ້ ແລະ ບໍ່ເຄີຍຖືກເຜີຍແຜ່ຢູ່ໃສມາກ່ອນ, ລວມເຖິງເປັນບົດເພງທີ່ມ່ວນ, ສື່ສານຄວາມເຂົ້າໃຈກັບຜູ້ຟັງ, ແລະ ທີ່ສຳຄັນເປັນບົດເພງທີ່ສຳຜັດນອກ-ສຳຜັດໃນ-ສຳຜັດແຕ່ລະວັກ-ສຳຜັດແຕ່ລະແຖວໃຫ້ພາສາຕ່ອງຄ່ອງຄົມຄາຍກົມກືນໄດ້ຄວາມໝາຍ, ຕາມຫຼັກການຂອງການປະພັນເພງ. ບົດເພງທີ່ດີຕ້ອງມີການເໜັ່ງຕຶງຂອງຕົວລະຄອນ, ມີການທັກທາຍສົນທະນາ, ມີການຕັ້ງບັນຫາ, ມີການປຽບທຽບເພື່ອສ້າງພາບພົດທີ່ສວຍສົດງົດງາມ (ໄພວັນ ມາລາວົງ, 2019, ໜ້າ. 276-277) ຈາກໂຄງການຝຶກອົບຮົມການປະພັນເພງຄັ້ງນີ້ ເຫັນວ່າມີຜົນປະໂຫຍດຢ່າງໃຫຍ່ຫຼວງຕໍ່ກັບຄູ-ອາຈານ ແລະ ນັກສຶກສາ ໂດຍສະເພາະແມ່ນຜູ້ທີ່ມັກຮັກບົດເພງ,ສຽງເພງ,ໄດ້ເປັນແຮງກະຕຸ້ນ,ເປັນບົດຮຽນອັນລ້ຳຄ່າຢ່າງມະຫາສານໃນການສານຕໍ່ຄວາມຄິດ, ຈິນຕະນາການອັນກວ້າງໄກ, ເປັນການສືບສານມໍລະດົກອັນລ້ຳຄ່າໂດຍ ສະເພາະພາສາ ແລະ ສຽງເພງ, ເປັນການລິເລີ່ມການຮ່ວມມືທີ່ຈະນຳໄປສູ່ການຮັດແໜ້ນສາຍສຳພັນການພົວພັນ ຢ່າງຮອບດ້ານ. ພ້ອມດຽວກັນນັ້ນ, ໂຄງການດີໆແບບນີ້ຈະບໍ່ເກີດຂຶ້ນໄດ້ຖ້າຫາກປາສະຈາກຄວາມສາມັກຄີອັນເປັນປຶກແຜ່ນ, ການປະສານງານຢ່າງກົມກຽວ ແລະ ທຶນຮອນທາງວັດຖຸ-ຈິດໃຈຈາກຫຼາຍໜ່ວຍງານຮ່ວມກັນ. ສຸດທ້າຍກໍ່ຕ້ອງຂໍຂອບໃຈໂຄງການຝຶກອົບຮົມການປະພັນເພງພາຍໃຕ້ແຜນກິດຈະກຳການຮ່ວມມືລະຫວ່າງຄະນະສຶກສາສາດ ແລະ DVV International ທີ່ໄດ້ມີໂຄງການອັນມີຄຸນຄ່າມະຫາສານແບບນີ້ຂຶ້ນມາ.



DVV International

Education for Everyone. Worldwide.
Lifelong.



# ປ່ຽນສູນການຮຽນຮູ້ຊຸມຊົນ ແລະ ສູນຊາວໜຸ່ມໃຫ້ເປັນສູນການຮຽນຮູ້ຕະຫຼອດຊີວິດ

*Ean Sochet,* DVV International ປະຈຳກຳປູເຈຍ



Project Manager
DVV International
in the Cabodia Office

ເພື່ອມີສ່ວນຮ່ວມໃນການສ້າງການບໍລິການການຮຽນຮູ້ຕະຫຼອດຊີວິດທີ່ເໝາະສົມ ເຊິ່ງທຸກຄົນ ໂດຍສະເພາະກຸ່ມທີ່ມີຄວາມສ່ຽງ ແລະ ກຸ່ມຜູ້ດ້ອຍໂອກາດສາມາດເຂົ້າເຖິງໄດ້ຢ່າງງ່າຍດາຍ, ໄດ້ຮັບປະໂຫຍດໃນການປັບປຸງການດຳລົງຊີວິດ, ຫ້ອງການ ດີວີວີ ອິນເຕີເນເຊິນແນວ ປະຈຳປະເທດກຳປູເຈຍໄດ້ມີໂຄງການຕົວແບບໃນການຫັນປ່ຽນສູນການຮຽນຮູ້ຊຸມຊົນ (ສຮຊ) ແລະ ສູນຊາວໜຸ່ມ (ສຊ) ໃຫ້ເປັນສູນການຮຽນຮູ້ຕະຫຼອດຊີວິດ (LLLC), ພາຍໃນໂຄງການໄລຍະເວລາ 3 ປີ (2021-2023) ໂດຍຮ່ວມມືກັບກົມການສຶກສານອກໂຮງຮຽນ ແລະ ກົມພັດທະນາຊາວໜຸ່ມ.

ໃນໄລຍະທຳອິດຕົ້ນປີ 2021 ເຮົາເລີ່ມເຮັດວຽກກັບ ສຮຊ 4 ແຫ່ງ ແລະ ສຊ 1 ແຫ່ງ. ປະຈຸບັນນີ້ກຳລັງຂະຫຍາຍກິດຈະກຳໂຄງການຂອງເຮົາເປັນ ສຊ ອີກ 4 ແຫ່ງ ແລະ ສຮຊ ເພີ່ມອີກ 1 ແຫ່ງ ຫຼັງຈາກທີ່ເຫັນຜົນໄດ້ຮັບທີ່ມີປະສິດທິຜົນໃນສູນທີ່ເລືອກໄວ້ກ່ອນໜ້ານີ້. ໂດຍລວມແລ້ວ ເຮົາໄດ້ເຮັດວຽກຮ່ວມກັບສູນ 10 ແຫ່ງ ໃນໄຍລະທົດລອງ ເພື່ອໃຫ້ສູນທັງໝົດສາມາດເປັນສູນການຮຽນຮູ້ຕະຫຼອດຊີວິດ ພາຍໃນປີ 2023.

ຕາມແນວຄວາມຄິດ ແລະ ຂັ້ນຕອນທີ່ໄດ້ລະບຸໄວ້ໃນຄູ່ມືການຈັດການ ແລະ ການດຳເນີນການຂອງ ສູນການຮຽນຮູ້ຕະຫຼອດຊີວິດ, ເຮົາໄດ້ໃຫ້ການສະໜັບສະໜູນທາງດ້ານງົບປະມານ ແລະ ດ້ານວິຊາການໃຫ້ແກ່ທຸກສູນ ອີງຕາມຄວາມຕ້ອງການໃນການດຳເນີນກິດຈະກຳໂຄງການໃໝ່ ລວມມີ 1) ຫ້ອງຄອມພິວເຕີ, 2) ການເຮັດກະສິກຳ, 3) ການສ້າງລາຍຮັບ, ນອກເໜືອຈາກກິດຈະກຳການສຶກສາທີ່ມີຢູ່ ເຊັ່ນ: ຊັ້ນຮຽນຮູ້ໜັງສື, ທັກສະສັງຄົມ, ວິຊາຊີບ ແລະ ອື່ນໆ. ໃນຂະບວນການນີ້ ພວກເຮົາໄດ້ຈັດຄວາມສຳຄັນຂອງການສ້າງຄວາມອາດສາມາດໃຫ້ແກ່ຜູ້ບໍລິຫານ ແລະ ສະມາຊິກຄະນະກຳມະການ ແລະ ຄູ ໂດຍສ້າງການຮຽນອອນໄລສຳລັບການພັດທະນາທັກສະສັງຄົມ ແລະ ໂດຍການໃຫ້ຄຳປຶກສາ ແລະ ຝຶກຫັດຕົວຈິງ.

ດ້ວຍເຫດນີ້, ສູນທັງ 5 ແຫ່ງ ໃນໄລຍະທຳອິດຈຶ່ງໄດ້ເພີ່ມຄວາມຮູ້ ແລະ ທັກສະໃນການນຳໃຊ້ເຄື່ອງມືດິຈິຕອລ. ພວກເຂົາໄດ້ຈັດຫ້ອງຄອມພິວເຕີຂອງຕົນເອງ ແລະ ສ່ວນໃຫຍ່ແມ່ນສາມາດຈັດປະຊຸມແບບຄືເຫັນໜ້າໂດຍຜ່ານໂປຣແກຣມ Zoom ຫຼື Google Meet ສຳລັບກຸ່ມທີ່ຢູ່ໄກໄດ້. ພວກເຂົາສາມາດນຳໃຊ້ຮູບແບບທາງໄກເພື່ອແບ່ງປັນບັນຫາສິ່ງທ້າທາຍ ແລະແນວທາງການປະຕິບັດທີ່ດີທີ່ສຸດ ແລະ ເພື່ອແຈ້ງຂ່າວຄວາມຄືບໜ້າຕ່າງໆຜ່ານກຸ່ມໂທລະເລກ. ນອກຈາກນີ້, ພວກເຂົາຍັງໃຊ້ ສື່ສັງຄົມອອນໄລ ເຊັ່ນ facebook, youtube ແລະ google ເພື່ອຄົ້ນຫາ ແລະ ຮຽນຮູ້ເຕັກນິກໃໝ່ໆ ຂອງການເຮັດກະສິກຳ ແລະ ການສ້າງລາຍຮັບ. ສູນທັງຫ້າແຫ່ງ ສ່ວນຫຼາຍສາມາດປູກຜັກ ແລະ ລ້ຽງປາ/ໄກ່ ແລະ ສ້າງລາຍຮັບໃຫ້ແກ່ສູນໂດຍການຂາຍຜະລິດຕະພັນກະສິກຳ ຕະຫຼອດຈົນເຖິງການປັບປຸງການບໍລິການຊຸມຊົນ ເຊັ່ນ: ການລອກລາຍພິມຜ້າ, ການພິມຜ້າໄໝ, ເສີມສວຍ, ຕັດຫຍິບ ແລະ ຫັດຖະກຳ. ພວກເຂົາໄດ້ປ່ຽນສະພາບແວດລ້ອມຂອງສູນຈາກເປັນສະຖານທີ່ງຽບສະຫງົບ ເປັນພື້ນທີ່ການມີສ່ວນຮ່ວມຂະໜາດໃຫຍ່ ນັກສຶກສາ ແລະ ຊາວໜຸ່ມໃນຊຸມຊົນໄດ້ຮັບຮູ້ການປ່ຽນແປງທີ່ສຳຄັນຂອງສູນ ແລະ ຊ່ວຍເຫຼືອສູນໂດຍຜ່ານການຝຶກງານຂອງເຂົາເຈົ້າ. ສະມາຊິກຊຸມຊົນ ແລະ ຄົນພາຍນອກໄດ້ມາຢ້ຽມຢາມສູນເພື່ອສົນທະນາ ແລະ ຮຽນຮູ້ເພີ່ມເຕີມ ແລະ ຊື້ ຜະລິດຕະພັນ ແລະ ການບໍລິການຂອງສູນ.

ສູນການຮຽນຮູ້ຊຸມຊົນ Sre Knong ເປັນຕົວແບບທີ່ດີໃນໂຄງການທົດລອງ. ມັນໄດ້ການເປັນແບບຢ່າງສູນ ແລະ ສຮຊ ແຫ່ງອື່ນໆ ແລະ ໃນປະຈຸບັນມັນເປັນຕົວແບບທີ່ເປັຍສູນກາງທີ່ເຕີບໂຕໄວ ໃນແງ່ຂອງຄວາມເປັນຜູ້ນຳ, ໄອຊີທີ, ການລະດົມຊັບພະຍາກອນ ຄວາມຄິດສ້າງສັນ ແລະ ເຕັກນິກຂອງການເຮັດສວນຄົວ ແລະ ການເຮັດຟາມ ລວມທັງການສ້າງລາຍຮັບ. ມັນໄດ້ເປັນແຮງຈູງໃຈໃຫ້ສູນອື່ນໆອີກ 9 ແຫ່ງ ປ່ຽນຄວາມຄິດ ແລະ ທັດສະນະຄະຕິ. ພວກເຮົາຄັດເລືອກຜູ້ຊ່ຽວຊານ 3 ທ່ານໃນພື້ນທີ່ ເພື່ອເຂົ້າຮ່ວມເປັນຄະນະເຮັດວຽກທາງດ້ານວິຊາການ ໃນການສະໜັບສະໜູນສູນອື່ນໆ ທັງໝົດ.



# ການຈັດຕັ້ງປະຕິບັດວຽກງານອາສາສະໝັກຢູ່ ສູນການຮຽນຮູ້ຊຸມຊົນ ແລະ ສູນຊາວໜຸ່ມ

*Uy Kea & Ros Keng*, ກົມສູນກາງຊາວໜຸ່ມ, ກະຊວງສຶກສາທິການ, ຊາວໜຸ່ມ ແລະ ກິລາ

ກົມສູນກາງຊາວໜຸ່ມ, ກະຊວງສຶກສາທິການ, ຊາວໜຸ່ມ ແລະ ກິລາ ປະເທດກຳປູເຈຍ ຮ່ວມມືກັບ ຫ້ອງການ ດີວີວີ ອິນເຕີເນເຊິນແນວ ໄດ້ຈັດຕັ້ງໂຄງການ **"ນຳໃຊ້ທັກສະສັງຄົມ ສຳລັບຊາວໜຸ່ມ ແລະ ຜູ້ໃຫຍ່"**. ໂຄງການນີ້ ໄດ້ສ້າງໂອກາດ ໃຫ້ຊາວໜຸ່ມໄດ້ເປັນອາສາສະໝັກ ເພີ່ມພູນປະສົບການ ສ້າງຄວາມສາມາດ ແລະ ມີສ່ວນຮ່ວມໃນການພັດທະນາ ສັງຄົມ ລວມທັງການກຽມພ້ອມສຳລັບການຈ້າງງານໃນ ອະນາຄົດ.

ໃນປີ 2020 ໂຄງການ **"ນຳໃຊ້ທັກສະສັງຄົມສຳລັບຊາວໜຸ່ມ ແລະ ຜູ້ໃຫຍ່"** ໄດ້ຄັດເລືອກອາສາສະໝັກຊາວໜຸ່ມ ສອງທ່ານ ໃນແຕ່ລະແຂວງເພື່ອເຮັດວຽກໃນສູນການຮຽນຮູ້ຊຸມຊົນ (ສຮຊ) 10 ແຫ່ງ ທີ່ແຂວງພະນົມເປັນ, ກາດານ, ກຳປົດ, ກຳປົງສະປື, ແປຣເວງ, ກຳປົງຊະນັງ, ພູສັດ, ບັດຕຳບັງ, ເປຣວາເຫັຍ ແລະ ຣັດຕະນະຄີຣີ ເພື່ອເປີດໂອກາດໃຫ້ອາສາ-ສະໝັກຊາວໜຸ່ມໄດ້ນຳໃຊ້ທັກສະເຂົ້າໃນໂຄງການພັດທະນາ ຊຸມຊົນ , ຂະຫຍາຍຄວາມຮູ້, ປະສົບການ, ທັກສະຊີວິດ, ຂະຫຍາຍມິດຕິພາບ, ຄວາມຮ່ວມມື, ການຮ່ວມມືລະຫວ່າງເພື່ອນ ແລະ ຄົນອື່ນໆ, ສ້າງຄວາມ ຕະໜັກໃຫ້ຮູ້ເຖິງຄວາມສຳຄັນ ແລະ ປະໂຫຍດຂອງວຽກງານ ອາສາມະໝັກສຳລັບຊາວໜຸ່ມ, ພັດທະນາເຄືອຂ່າຍ ຈາກ ລະດັບຊາດ ເຖິງລະດັບພາກພື້ນ ແລະ ເຊື່ອມໂຍງຫາຊຸມຊົນ, ສະຖາບັນທີ່ກ່ຽວຂ້ອງ, ຄູ່ຮ່ວມພັດທະນາ, ແລະ ການ ພັດທະນາຊັບພະຍາກອນມະນຸດ ແລະ ເປີດໂອກາດໃຫ້ຊາວ ໜຸ່ມໃນຊຸມຊົນໄດ້ມີສ່ວນຮ່ວມ. ການດຳເນີນໂຄງການນີ້ ປະສົບຜົນສຳເລັດສະແດງອອກໄດ້ ເຊັ່ນ: ຊາວໜຸ່ມສາມາດ ເຮັດວຽກຢ່າງຫ້າວຫັນ ແລະ ໄດ້ຮັບການຍ້ອງຍໍຈາກຊຸມຊົນ ແລະ ປະທານ ສຮຊ ໃນລະດັບຊາດ.

ໃນປີ 2021, ໂຄງການ **"ນຳໃຊ້ທັກສະສັງຄົມສຳລັບຊາວໜຸ່ມ ແລະ ຜູ້ໃຫຍ່"** ໄດ້ຜັນຂະຫຍາຍເປັນແນວຄວາມຄິດເຕັມຮູບ ແບບຂອງ "ຈັດຕັ້ງປະຕິບັດວຽກງານອາສາສະໝັກຊາວໜຸ່ມ ໃນ ສຮຊ ແລະ ສຊ", ເຊິ່ງຂະຫຍາຍ ແລະ ສ້າງຄວາມເຂັ້ມແຂງ ເພື່ອນຳແນວຄວາມຄິດອາສາສະໝັກໄປປະຕິບັດຢ່າງມີ ປະສິດທິຜົນຍິ່ງຂຶ້ນ ໂດຍມີທັງໝົດ 16 ແຫ່ງໃນ 15 ແຂວງ: ແຂວງກາດານ, ກຳປົງສະປື, ກຳປົດ, ກຳປົງຊະນັງ, ທາແກ້ວ, ກຳປົງຈຳ, ກຳປົງທົມ, ແປຣເວງ, ຊະເວລຽງ, ພູສັດ, ບັດຕຳບັງ, ບານເຕີຍ, ມົນເຈ, ອົດດາມົນເຈ, ເປຣວາເຫັຍ ແລະ ຣັດຕະນະຄີຣີ ເຊິ່ງດຳເນີນການມາເປັນເວລາ 30 ວັນ ເພື່ອໃຫ້ ຊາວໜຸ່ມໄດ້ເຂົ້າຮ່ວມຝຶກງານ ແລະ ໄດ້ຮັບປະສົບການໃນ



" ສຊ ເປັນສະຖານທີ່ຝຶກອົບຮົມວິຊາຊີບ ແລະ ເຊື່ອມໂຍງຈາກການສຶກສາໄປສູ່ຕະຫຼາດແຮງງານ ການພົວພັນກັນລະຫວ່າງ ໂຮງຮຽນ ແລະ ສຊ ເປັນສິ່ງສຳຄັນສຳລັບ ສຊ ເພື່ອຫລຸດຜ່ອນຄວາມທຸກຈົນໃນກຸ່ມຊາວໜຸ່ມ"
*ພະນະທ່ານ Sean Borath, ເລຂາທິການຂອງ ກະຊວງສຶກສາທິການ, ຊາວໜຸ່ມ ແລະ ກິລາ*




ໂຄງການ "ນຳໃຊ້ທັກສະສັງຄົມສຳລັບຊາວໜຸ່ມ ແລະ ຜູ້ໃຫຍ່"

ສຮຊ ແລະ ສຊ ແລະ ສົ່ງເສີມໃຫ້ຄົນໜຸ່ມ ສາມາດເຂົ້າຮ່ວມໃນກິດຈະກຳທີ່ສະທ້ອນເຖິງການດຳລົງຊີວິດຕົວຈິງໃນຊຸມຊົນທີ່ເຂົາເຈົ້າອາໃສຢູ່.

ໂຄງການມີຈຸດປະສົງດັ່ງຕໍ່ໄປນີ້:

- ສະໜອງໂອກາດໃຫ້ອາສາສະໝັກຊາວນໜຸ່ມໄດ້ໃຊ້ເວລາ, ຄວາມສາມາດ ແລະ ທັກສະຂອງເຂົາເຈົ້າໃນການມີສ່ວນຮ່ວມພັດທະນາ ສຮຊນ ແລະ ສຊ
- ສະໜັບສະໜູນໃຫ້ສຮຊ ແລະສຊ ທ້າວທັນໃຫ້ບໍລິການແກ່ປະຊາຊົນ ແລະ ພ້ອມທີ່ຈະຫັນປ່ຽນເປັນສູນການຮຽນຮູ້ຕະຫຼອດຊີວິດ.

ໂຄງການ "ຈັດຕັ້ງປະຕິບັດວຽກງານອາສາສະໝັກຊາວໜຸ່ມໃນ ສຮຊ ແລະ ສຊ" ມີວິໄສທັດ ເພື່ອຊຸກຍູ້ໃຫ້ຊາວໜຸ່ມກຳປູເຈຍໄດ້ນຳໃຊ້ເວລາຫວ່າງ ຂອງເຂົາເຈົ້າເປັນອາສາສະໝັກ ເພື່ອຫາປະສົບການ ແລະ ມີສ່ວນຮ່ວມໃນການພັດທະນາຊຸມຊົນທີ່ພວກເຂົາອາໃສຢູ່ ແລະ ກຽມພ້ອມສຳລັບການເຮັດວຽກໃນອະນາຄົດ. ດ້ວຍການສົ່ງອາສາສະໝັກໄປຢູ່ ສຮຊ ແລະ ສຊ ໄດ້ມີການສ້າງຕັ້ງ ກົນໄກເພື່ອອຳນວຍຄວາມສະດວກເພື່ອສະໜັບສະໜູນ ສຮຊ ແລະ ສຊ ໃນການສ້າງຄວາມອາດສາມາດ ແລະນຳໃຊ້ປະໂຫຍດຈາກທ່າແຮງຊາວໜຸ່ມທັງທາງດ້ານທັກສະສັງຄົມ, ວິຊາການ ແລະ ທັກສະໄອທີ.

ດັ່ງນັ້ນ, ພາຍຫຼັງການເປັນອາສາສະໝັກຢູ່ ສຮຊ ແລະ ສຊ, ຊາວໜຸ່ມຈຳນວນໜຶ່ງໄດ້ຮັບຄວາມຮູ້ດ້ານພາກປະຕິບັດ ແລະ ໄດ້ຮັບການຄັດເລືອກ ໄປເຮັດວຽກຢູ່ ສຊ, ຈຳນວນໜຶ່ງໄດ້ເຮັດວຽກຢູ່ສະຖາບັນຂອງລັດ ແລະ ເອກະຊົນ ແລະ ບາງຈຳນວນໄດ້ສອບເສັງທຶນໄປຮຽນຕໍ່ຢູ່ຕ່າງປະເທດ.

ໃນປີ 2021, ດີວີວີ ອິນເຕີເນເຊິນແນວ ໄດ້ຊ່ວຍສ້າງຕັ້ງ ສຊ ແຂວງໃນແຂວງກຳປົງຊະນັງ ການເປັນ ສູນການຮຽນຮູ້ຕະຫຼອດຊີວິດ, ແລະ ໃນທ້າຍປີ 2021 ໂຄງການໄດ້ຄັດເລືອກເອົາ ສຊ ອີກ 3 ແຫ່ງຫັນມາເປັນສູນການຮຽນຮູ້ຕະຫຼອດຊີວິດ ເປັນຕົ້ນແມ່ນ ສຊ ແຂວງທາແກ້ວ, ສຊ ແຂວງ ກຳປົງຈຳ, ສຊ ແຂວງ ກຳປົງທົມ. ປະຈຸບັນນີ້, ສຊ 4 ແຫ່ງນີ້ໄດ້ສະໜອງການຝຶກອົບຮົມວິຊາຊີບເຊັ່ນ ການຝຶກອົບຮົມຄອມພິວເຕີ, ຕັດຫຍິບ, ການແຕ່ງໜ້າ, ການລ້ຽງປາ ແລະ ປູກຝັງ.

ກະຊວງສຶກສາທິການ, ຊາວໜຸ່ມ ແລະ ກິລາ ເຊື່ອໝັ້ນວ່າການຮ່ວມມືລະຫວ່າງ ກົມສູນກາງຊາວນຸ່ມ ແລະ ຫ້ອງການ ດີວີວີ ອິນເຕີເນເຊິນແນວ ຄັ້ງນີ້ ຈະເປີດໂອກາດໃຊ້ຊາວໜຸ່ມກຳປູເຈຍສ້າງຄວາມສາມາດ ແລະ ມີສ່ວນຮ່ວມໃນການສ້າງຜົນປະໂຫຍດໃຫ້ແກ່ຊຸມຊົນທີ່ເຂົາເຈົ້າອາໃສຢູ່. ກົມສູນກາງຊາວໜຸ່ມ ແລະ ດີວີວີ ອິນເຕີເນເຊິນແນວ ໃຫ້ຄຳໝັ້ນສັນຍາວ່າຈະສະໜັບສະນູນວຽກງານນີ້ຕໍ່ໄປ ເພື່ອບັນລຸວິໄສທັດຂອງໂຄງການ ແລະ ນະໂຍບາຍຂອງລັດຖະບານກຳປູເຈຍ.

# ການແບ່ງແຍກດ້ານດິຈິຕອລ, ການສຶກສາ ແລະ ກຸ່ມດ້ອຍໂອກາດ: ບົດຮຽນຈາກ ASPBAE ໃນບໍລິບົດຂອງ ໂຄວິດ-19

ສັງຄົມຂອງພວກເຮົາຖືກແບ່ງອອກເປັນຫຼາຍຮູບແບບ- ໂດຍ ຊັ້ນ-ວັນນະ, ຊັ້ນຄົນ, ເຊື້ອຊາດ, ເພດ, ບົດບາດ ແລະ ຊົນເຜົ່າ ເປັນຕົ້ນ. ການລະບາດໃຫຍ່ຂອງໂຄວິດ-19 ໄດ້ນຳໄປສູ່ການ ແບ່ງແຍກທາງດ້ານເຕັກໂນໂລຊີທີ່ເລິກລົງໄປຕື່ມ. ຄົນທີ່ມີສິດ ທິສາມາດເຂົ້າເຖິງເຕັກໂນໂລຊີ ສາມາດຄົ້ນຫາ ທຸກຢ່າງໄດ້ ພຽງແຕ່ຄລິກ (Click), ແຕ່ສຳລັບຄົນທີ່ບໍ່ມີໄມ້ຄ້ອນວິເສດ ເຂົາກໍບໍ່ສາມາດເຮັດຫຍັງໄດ້. ໃນໂລກທາງກາຍະພາບ, ຜູ້ມີຊັບພະຍາກອນນ້ອຍກວ່າ, ການເຂົ້າເຖິງທີ່ຈຳກັດ ແລະ ບໍ່ມີໜ່ວຍງານຊຸກເຂົາໄປຢູ່ຂອບ, ໃນຂະນະທີ່ຄົນທີ່ຢູ່ທາງກາງ ຊື່ນຊົມກັບອຳນາດ. ໃນປະຈຸບັນ, ຮູບແບບທີ່ຄ້າຍຄືກັນແມ່ນ ໄດ້ຮັບການຜະລິດຄືນໃໝ່ໃນໂລກທີ່ເໝືອນຈິງດ້ວຍການ ສຶກສາອອນໄລເປັນຕົວຢ່າງທີ່ຊັດເຈນ.

ເພື່ອຄວບຄຸມການແຜ່ກະຈາຍຂອງໂລກລະບາດ, ຫຼາຍ ປະເທດ ໄດ້ປິດສະຖາບັນການສຶກສາ ແລະ ປ່ຽນຮູບແບບການ ຮຽນຮູ້ໄປເປັນຮູບແບບອອນໄລ. ການປ່ຽນແປງນີ້ເກີດຂຶ້ນ ຢ່າງກະທັນຫັນ, ບໍ່ໄດ້ກຽມໂຕ ແລະ ບໍ່ມີການຈັດກຽມໂຄງສ້າງ ພື້ນຖານ ແລະ ຄວາມພ້ອມທີ່ຈຳເປັນສຳລັບຮູບແບບການ ຮຽນຮູ້ທີ່ນຳໃຊ້ເຕັກໂນໂລຊີ. ການປິດໂຮງຮຽນມີຜົນເສຍຫຼາຍ ປະການ. ບໍ່ພຽງແຕ່ສິ່ງຜົນຕໍ່ຄວາມກ້າວໜ້າທາງວິຊາການ ຂອງນັກຮຽນເທົ່ານັ້ນ, ແຕ່ລວມທັງການເຂົ້າເຖິງອາຫານທ່ຽງ ແລະ ທີ່ພັກອາໄສທີ່ປອດໄພທີ່ນັກຮຽນທຸກຍາກຕ້ອງໄດ້ເພິ່ງ ພາອາໃສ. ການປິດໂຮງຮຽນຍັງປິດໂອກາດສຳຄັນຂອງການ ເຂົ້າສັງຄົມ ເຊິ່ງມັນເປັນສ່ວນໜຶ່ງຂອງການພັດທະນາຄວາມ ຮູ້, ຄວາມເຂົ້າໃຈ ແລະ ສັງຄົມຂອງເດັກນ້ອຍ.

ການປິດໂຮງຮຽນ ແລະ ວິທະຍາໄລສົ່ງຜົນກະທົບຕໍ່ນັກຮຽນທີ່ ທຸກຈົນຫຼາຍລ້ານຄົນ ແລະ ຫຼັກຖານທີ່ສະແດງໃຫ້ເຫັນວ່າສຳ ລັບປະເທດທີ່ມີຜົນການຮຽນຕໍ່າ, ມີການຢຸດຮຽນເປັນຈຳນວນ ຫຼາຍ ແລະ ພື້ນຖານໂຄງລ່າງບໍ່ພຽງພໍຜົນກະທົບໃນທາງລົບ ແມ່ນຫຼາຍກວ່າ. ມັນພຽງແຕ່ໝາຍຄວາມວ່າຫຼາຍໆຄົນຈາກ ກຸ່ມທີ່ດ້ອຍໂອກາດບໍ່ຫນ້າຈະກັບຄືນໄປຮຽນ ແລະ ຜູ້ທີ່ບໍ່ເຄີຍ ເຂົ້າຮຽນຈະຍັງຄົງຖືກກີດກັນຈາກໂອກາດໃນການຮຽນຮູ້ ເຖິງ ແມ່ນວ່າຈະເປັນພຽງທັກສະພື້ນຖານເຊັ່ນ: ການຮູ້ໜັງສື ຫຼື ການຄຳນວນ.

ມີຄວາມສ່ຽງຢ່າງໃຫຍ່ຫຼວງຕໍ່ສຸຂະພາບເນື່ອງຈາກການປະຕິ ສຳພັນທາງສັງຄົມກັນແບບຕໍ່ໜ້າ ໃນທ່າມກາງການລະບາດ ໃຫຍ່ຂອງໂຄວິດ-19, ລັດຖະບານຫຼາຍປະເທດໃນທົ່ວໂລກ ຈຶ່ງຫັນໄປປິດໂຮງຮຽນຢ່າງຕໍ່ເນື່ອງຫຼືນຳໃຊ້ຮູບແບບການຮຽນ ຮູ້ແບບປະສົມປະສານ. ໃນບໍລິບົດນີ້, ການສຶກສາອອນໄລ ໄດ້ ຮັບການສົ່ງເສີມໃຫ້ເປັນທາງເລືອກທີ່ດີທີ່ສຸດ - ເຊິ່ງເປັນສາຂາ ທີ່ມີພາກເອກະຊົນເປັນຫຼັກໃນການບໍລິການ ແລະ ຫາຜົນ ກຳໄລ. ຂໍ້ມູນສະແດງໃຫ້ເຫັນຢ່າງຊັດເຈນວ່ານັກສຶກສາ ເກືອບເຄິ່ງໂລກຜະເຊີນກັບອຸປະສັກໃນການເຂົ້າເຖິງຄອມພິວ ເຕີ ແລະ ສິ່ງອຳນວຍຄວາມສະດວກທາງອິນເຕີເນັດ. ອີງຕາມ ລາຍງານຈາກຕົວຢ່າງໃນລະດັບຊາດດ້ານການສຶກສາປະຈຳ ປີ 2017-2018 ພົບວ່າມີ ພຽງ 24% ຂອງຈຳນວນຄົວເຮືອນ ທັງໝົດໃນປະເທດອິນເດຍ ທີ່ມີອິນເຕີເນັດ ແລະ ຫຼາຍກວ່າ 36% ຂອງຈຳນວນໂຮງຮຽນໃນທົ່ວປະເທດທີ່ເປີດສອນໂດຍ ບໍ່ມີໄຟຟ້າ. ຄວາມແຕກໂຕນເຫຼົ່ານີ້ກາຍເປັນທີ່ເຫັນໄດ້ ຊັດເຈນ ໃນທົ່ວທຸກສະຖານທີ່ທາງດ້ານພູມສາດ, ລາຍໄດ້ ແລະ ກຸ່ມການສຶກສາ, ຊົນເຜົ່າ ແລະ ກຸ່ມຄົນ ທີ່ມີ ຄວາມຕ້ອງການພິເສດ.

ຜົນການວິໄຈຂອງ Youth-led Action Research (YAR) (ເດືອນພຶດສະພາ ຫາ ກໍລະກົດ 2020), ທີ່ສະໜັບ ສະໜູນໂດຍສະມາຄົມ ASPBAE ໃນ 9 ປະເທດໃນອາຊີ- ປາຊີຟິກ ຊີ້ໃຫ້ເຫັນຢ່າງຊັດເຈນເຖິງຮູບແບບການຈຳແນກ, ຊ່ອງຫວ່າງ ແລະ ສິ່ງທ້າທາຍຕ່າງໆ ໃນລະບົບການສຶກສາໃນ ໄລຍະເວລາການລະບາດຂອງ ໂຄວິດ-19.

ໃນປະເທດມົງໂກນ ແລະ ບັງກະລາເທດ ນັກວິໄຈລາຍງານ ວ່ານັກຮຽນຈຳນວນຫຼາຍທີ່ບໍ່ສາມາດເຂົ້າເຖິງການສຶກສາ ອອນໄລ ຖືກປ່ອຍໄວ້ທາງຫຼັງ ແລະ ມີໂອກາດທີ່ຈະຢຸດການ ຮຽນໃນລະບົບໂຮງຮຽນ, ມັນເປັນຄວາມທ້າທາຍຫຼາຍ ທີ່ຈະ ພາພວກເຂົາກັບເຂົ້າມາຮຽນຄືນອີກ.

ນັກວິໄຈຊາວໜຸ່ມໃນ ອິນໂດເນເຊຍແບ່ງປັນວ່າ: ນັກຮຽນທີ່ ອາໃສຢູ່ໃນເຂດຫ່າງໄກສອກຫຼີກບໍ່ມີໄຟຟ້າ ແລະ ໂທລະສັບ. ມັນເກືອບເປັນໄປບໍ່ໄດ້ເລີຍທີ່ ເຂົາເຈົ້າຈະເປັນເຈົ້າຂອງ ອຸປະກອນ ແລະ ເຂົ້າເຖິງອິນເຕີເນັດ. ຜູ້ເຂົ້າຮ່ວມທ່ານໜຶ່ງ ເວົ້າວ່າ, “ນັກຮຽນຕ້ອງການຊື້ແພັດເກັດອິນເຕີເນັດທີ່ມີລາຄາ ແພງ ແລະ ຜູ້ທີ່ຊື້ມັນໄດ້ບໍ່ຮູ້ວິທີນຳໃຊ້ອິນເຕີເນັດຢ່າງຖືກ ຕ້ອງ. ຄູພຽງແຕ່ໃຫ້ວຽກບ້ານ ແລະ ຄາດຫວັງໃຫ້ພໍ່ແມ່ຕິດຕາມ ແລະ ສະໜັບສະໜູນລູກເຂົາເຈົ້າ”

ການສັງເກດການນີ້ໄດ້ຖືກແບ່ງປັນໂດຍນັກຄົ້ນຄວ້າໃນ ປະເທດ ຕີມໍເລສເຕ. ເຂົາເຈົ້າໄດ້ຕີລາຄາເຖິງຄວາມຫຍຸ້ງ ຍາກຂອງຊາວໜຸ່ມໂດຍສະເພາະເຂດຊົນນະບົດ ໃນການ ເຂົ້າເຖິງໂອກາດການຮຽນທາງໄກ, ຍ້ອນບໍ່ມີການເຂົ້າເຖິງ ບໍ່ ພຽງແຕ່ລະບົບອິນເຕີເນັດເທົ່ານັ້ນ ແຕ່ຍັງມີປັນຫາໄຟຟ້າ ອີກດ້ວຍ. ພຽງແຕ່ການແກ້ປັນຫາທີ່ໃຊ້ເຕັກໂນໂລຊີຂັ້ນ ພື້ນຖານຜ່ານທາງວິທະຍຸ ແລະ ໂທລະພາບກໍຍັງບໍ່ສາມາດ

ເຮັດໄດ້ສໍາລັບພວກເຂົາເຈົ້າ. ນັກວິໄຈໜຸ່ມຍັງໄດ້ແນະນໍາວ່າສື່ການຮຽນຮູ້ທາງກາຍະພາບ (ໜັງສື, ເອກະສານປະກອບຄໍາບັນລະຍາຍ) ຍັງຄົງເປັນສື່ກາງສໍາລັບການຮຽນ-ການສອນ ສໍາລັບນັກຮຽນໃນເຂດຊົນນະບົດ. ໃນພື້ນທີ່ ທີ່ສາມາດເຊື່ອມຕໍ່ອິນເຕີເນັດໄດ້ກໍແມ່ນມີຄ່າບໍລິການສູງ. ການເຂົ້າເຖິງການບໍລິການອິນເຕີເນັດຟຣີ ຈະເປັນປະໂຫຍດຫຼາຍສໍາລັບຊາວໜຸ່ມທີ່ດ້ອຍໂອກາດ ເພື່ອສາມາດເຂົ້າເຖິງໂອກາດໃນການຮຽນຮູ້ທີ່ໃນ ແລະ ນອກໂຮງຮຽນ ລວມທັງການເຂົ້າເຖິງຂໍ້ມູນຂ່າວສານກ່ຽວກັບສຸຂະພາບ, ຄວາມປອດໄພ ແລະ ໂອກາດໃນການດໍາລົງຊີວິດ.

ນັກວິໄຈໜຸ່ມຈາກປະເທດເນປານ ລາຍງານວ່າການລະບາດໃຫຍ່ກໍາລັງສ້າງຄວາມແຕກໂຕນທາງການສຶກສາ ໂດຍການຫຼຸດໂອກາດສໍາລັບເດັກນ້ອຍ, ຊາວໜຸ່ມ ແລະ ຜູ້ໃຫຍ່ທີ່ຢູ່ໃນກຸ່ມສ່ຽງ. ເຂົາເຈົ້າກ່າວຕື່ມວ່າ ຊາວໜຸ່ມຈາກຄອບຄົວຊົນຊັ້ນກາງສາມາດເຂົ້າເຖິງຫ້ອງຮຽນ ອີ-ເລີນນິງໄດ້ ແຕ່ເຖິງຢ່າງໃດກໍຕາມ ຫ້ອງຮຽນເຫຼົ່ານີ້ໄດ້ຖືກລາຍງານວ່າເປັນຫ້ອງຮຽນທີ່ໜ້າເບື່ອ ແລະ ບໍ່ມີປະສິດທິຜົນສໍາລັບຊາວໜຸ່ມ. ນອກຈາກນັ້ນ, ເດັກນ້ອຍທີ່ມາຈາກຄອບຄົວທີ່ທຸກຈົນ ກໍບໍ່ສາມາດເຂົ້າເຖິງຫ້ອງຮຽນເຫຼົ່ານີ້ໄດ້ ແລະ ລວມທັງລາຍ ການວິທະຍຸ ແລະ ໂທລະພາບ ກໍບໍ່ມີປະສິດທິພາບສໍາລັບເຂົາເຈົ້າ.

ໃນຟິລິບປິນ, ນັກວິໄຈ ໄດ້ອະທິບາຍເຖິງຄວາມບໍ່ເທົ່າທຽມຂອງການບໍລິການການສຶກສາໃນໂຮງຮຽນເອກະຊົນ ແລະ ໂຮງຮຽນລັດ. ພວກເຂົາກ່າວວ່າ “ໂຮງນຽນເອກະຊົນມີລາຍໄດ້ສູງສາມາດປ່ຽນໄປໃຊ້ຮູບແບບອນໄລ ແລະ ເຄື່ອງມືດິຈິຕອລໄດ້ຢ່າງງ່າຍດາຍ ແຕ່ການເຂົ້າເຖິງຮູບແບບອອນໄລນັ້ນແມ່ນຍາກສໍາລັບນັກຮຽນໃນໂຮງຮຽນລັດສ່ວນຫຼາຍ”. ມີຂໍ້ສັງເກດວ່າສໍາລັບເດັກ ແລະ ຊາວໜຸ່ມທີ່ດ້ອຍໂອກາດຈໍານວນຫຼາຍສູນການຮຽນຮູ້ຊຸມຊົນໄດ້ສະໜັບສະໜູນເຂົາເຈົ້າຢ່າງມີໄນຍະສໍາຄັນ. ແຕ່ສູນການຮຽນຮູ້ຊຸມຊົນໄດ້ປິດລົງເປັນຈໍານວນຫຼາຍ ຫຼື ກໍາລັງພົບບັນຫາການສະໜັບສະໜູນທາງການເງິນ. ນອກຈາກນັ້ນ, ການຂາດການເຂົ້າເຖິງການຮຽນອອນໄລຍັງມີຜົນກະທົບໃນທາງລົບຕໍ່ການຝຶກອົບຮົມ ແລະ ການພັດທະນາທັກສະ.

ນັກວິໄຈຊາວໜຸ່ມຍິງ ຈາກເຂດຊົນນະບົດຂອງອິນເດຍໄດ້ເວົ້າວ່າ ການເຂົ້າເຖິງການສຶກສາອອນໄລແມ່ນມີອຸປະສັກທາງດ້ານເພດ. ຈາກການວິໄຈຂອງພວກເຂົາເດັກຍິງຕອງຜະເຊີນໜ້າກັບຄວາມທ້າທາຍໃນການເຂົ້າເຖິງອິນເຕີເນັດ ແລະ ການເປັນເຈົ້າຂອງອຸປະກອນ. ໜຶ່ງໃນນັກວິໄຈໜຸ່ມໄດ້ແບ່ງປັນວ່າ “ເດັກຍິງທີ່ເຮົາສໍາພາດມີພຽງ 20% ທີ່ເປັນເຈົ້າຂອງໂທລະສັບ ເຖິງແມ່ນວ່າພວກເຂົາຈະມີໂທລະສັບ ພວກເຂົາອາດຈະມີ ຫຼື ບໍ່ມີ ອິນເຕີເນັດ ອາດເກີດຈາກສັນຍານອິນເຕີເນັດທີ່ບໍ່ດີໃນໝູ່ບ້ານ”. ລາວເວົ້າຕື່ມອີກວ່າ “ຫາກເລື່ອງນີ້ຍັງຄົງດໍາເນີນຕໍ່ໄປອີກໄລຍະໜຶ່ງຄືໂຮງຮຽນຍັງສືບຕໍ່ປິດ ແລະ ການສຶກສາອອນໄລ



ຍັງຄົງເປັນຕົວເລືອກດຽວ ເຮົາກໍຈະຍັງຖືກກີດກັນ ແລະ 33% ຂອງເດັກຍິງເວົ້າວ່າພວກເຂົາອາດຈະອອກຈາກໂຮງຮຽນ”.

ໃນອີກດ້ານໜຶ່ງການສຶກສາໄດ້ຮັບການສະໜັບສະໜູນໃຫ້ເປັນໜຶ່ງໃນເສັ້ນທາງທີ່ຈະຫຼຸດພົ້ນຈາກວົງຈອນຄວາມທຸກຈົນ ແລະ ການກິດຂີ່ ໃນລະດັບຮາກຫຍ້າ, ຊາວໜຸ່ມທີ່ດໍາລົງຊີວິດຢູ່ໃນສະພາບແວດລ້ອມທີ່ທ້າທາຍນີ້ ມີຄວາມກັງວົນ ແລະ ບໍ່ແນ່ໃຈຕໍ່ກັບຄວາມຫວັງຂອງເຂົາເຈົ້າ. ນອກຈາກນີ້, ເນື່ອງມາຈາກຄ່າໃຊ້ຈ່າຍທີ່ເພີ່ມຂຶ້ນ, ການສູນເສຍລາຍໄດ້ ແລະ ເພື່ອການຢູ່ລອດ ພໍ່ແມ່ທີ່ທຸກຈົນ ບາງຄົນແມ່ນໄດ້ໂນ້ມນ້າວລູກສາວແຕ່ງງານແຕ່ອາຍຸຍັງນ້ອຍ.

ນັກວິໄຈຊາວໜຸ່ມໃນສີລັງກາໃຫ້ຄວາມກະຈ່າງແຈ້ງກ່ຽວກັບມຸມມອງຂອງຄູ. ຄູຢູ່ພາຍໃຕ້ແຮງກົດດັນອັນມະຫາສານ - ພວກເຂົາບໍ່ມີເຄື່ອງມືສໍາລັບການຝຶກອົບຮົມ ແລະ ການບໍລິການອິນເຕີເນັດ ທີ່ພຽງພໍສໍາລັບການການຮຽນ-ການສອນແບບດິຈິຕອລ. ເຖິງແມ່ນວ່າຫຼັງຈາກທີ່ໄດ້ຮ້ອງຂໍ ແລະ ຕິດຕາມຫຼາຍຄັ້ງ ລັດຖະບານກໍຍັງເບິ່ງຄືວ່າບໍ່ສົນໃຈກັບສະຖານະພາບຂອງເຂົາເຈົ້າ.

ຈາກຜົນຂອງການວິໄຈດັ່ງກ່າວ ກຸ່ມຊາວໜຸ່ມຂອງ YAR ໄດ້ຮ່າງຂໍ້ສະເໜີແນະ ເພື່ອສົ່ງໃຫ້ແກ່ລັດຖະບານ ອົງການປະຊາສັງຄົມ ແລະ ຄູ່ຮ່ວມພັດທະນາອື່ນໆ ເພື່ອແກ້ບັນຫາກ່ຽວກັບຄວາມແບ່ງແຍກດັ່ງກ່າວ ແລະ ແກ້ບັນຫາຊ່ອງຫວ່າງທາງການສຶກສາ ແລະ ການເຂົ້າເຖິງການຮຽນຮູ້ຂອງຊາວໜຸ່ມ :

- ເຮັດໃຫ້ການສຶກສາຊັ້ນສູງນັ້ນບໍ່ມີຄ່ານຊ້ຈ່າຍ ແລະ ເຂົ້າເຖິງໄດ້ສໍາລັບທຸກຄົນ ແລະ ເລີ່ມຕົ້ນເປີດໂຮງຮຽນ ແລະ ວິທະຍາໄລໃໝ່ໄດ້ຢ່າງປອດໄພ ແລະ ໄວທີ່ສຸດ ໂດຍໃຫ້ຄວາມສໍາຄັນໃນການຮັກສາສຸຂະພາບ ແລະ ຄວາມປອດໄພຂອງນັກຮຽນ ແລະ ນັກການສຶກສາເປັນສິ່ງທໍາອິດ.
- ໃຫ້ທຶນການສຶກສາແກ່ກຸ່ມດ້ອຍໂອກາດ
- ສົ່ງເສີມການສຶກສາ ແລະ ການຝຶກອົບຮົມໃນທ້ອງຖິ່ນ



ໂດຍສະເພາະໃນລະດັບໝູ່ບ້ານ - ສູນການຮຽນຮູ້ຊຸມຊົນຈຳເປັນຕ້ອງໄດ້ສ້າງຄວາມເຂັ້ມແຂງ ແລະ ຍືນຍົງ.

- ໂທລະພາບ, ວິທະຍຸ ແລະ ເຄື່ອງມືດິຈິຕອລ ພື້ນຖານສາມາດສຳຫຼວດເພື່ອລວມເອົາຊຸມຊົນໃນດ້ານການສຶກສາ.
- ຮັບປະກັນໃຫ້ການສຶກສາເປັນສິນຄ້າສາທາລະນະ ແລະ ລັດມີໜ້າທີ່ຮັບຜິດຊອບຫຼັກ, ລວມທັງການປະກັນການເຂົ້າເຖິງການຮຽນອອນໄລສຳລັບຜູ້ຮຽນ ແລະ ຄູທຸກຄົນໂດຍຜ່ານລະບົບການສຶກສາເພື່ອການປ່ຽນແປງ.
- ການ Lock down ໂດຍສົມບູນນຳພາຄວາມລຳບາກມາສູ້ປະຊາຊົນໂດຍສະເພາະແມ່ນກຸ່ມດ້ອຍໂອກາດ. ລັດຖະບານຄວນພັດທະນາລະບົບການສຶກສາ ແລະ ການພັດທະນາທີ່ຍືດຢຸ່ນ ພ້ອມຮັບມືກັບສະຖານະການສຸກເສີນທີ່ປົກປັກຮັກສາຊີວິດ ແລະ ຜົນປະໂຫຍດຂອງປະຊາຊົນທັງໝົດ.
- ລັດຖະບານຄວນປະຕິບັດ ແລະ ສົ່ງເສີມນະໂຍບາຍທີ່ຫຼຸດຜ່ອນການແບ່ງແຍກທາງດິຈິຕອລ ແລະ ເຄື່ອນຍ້າຍປະເທດໃຫ້ຫຍັບເຂົ້າໃກ້ການບັນລຸເປົ້າໝາຍການພັດທະນາແບບຍືນຍົງ.

ຄູ່ຮ່ວມພັດທະນາໃນ 9 ປະເທດໄດ້ເຮັດບົດລາຍງານການຄົ້ນຄວ້າຂອງພວກເຂົາ ແລະ ປະຈຸບັນໄດ້ມີສ່ວນຮ່ວມໃນການເຜີຍແຜ່ຜົນການຄົ້ນຄວ້າ ແລະ ຄຳແນະນຳຈາກການວິໄຈ. ເນື່ອງຈາກວ່າຮູບແບບຂອງການວິໄຈນີ້ມີພື້ນຖານມາຈາກການດຳເນີນການ, ຄູ່ຮ່ວມພັດທະນາຈຳນວນຫຼາຍໄດ້ດຳເນີນ ແລະ ສະໜັບສະໜູນ ຄູ່ຂະໜານກັນໃນທ້ອງຖິ່ນ. ຕົວຢ່າງໃນປະເທດຕີມໍເລສເຕ ກຸ່ມນັກວິໄຈຊາວໜຸ່ມໄດ້ນຳສະເໜີຜົນການວິໄຈຂອງເຂົາເຈົ້າຕໍ່ເລຂາທິການຂອງກະຊວງການຝຶກອົບຮົມ ແລະ ການຈ້າງງານ ໂດຍການຂໍຈັດສັນງົບປະມານພາກລັດ ສຳລັບຄວາມຕ້ອງການຂອງຊາວໜຸ່ມ ໂດຍສະເພາະການສ້າງໂອກາດທາງການສຶກສານອກໂຮງຮຽນ ແລະ ການຝຶກອົບຮົມໃນສູນການຮຽນຮູ້ຊຸມຊົນ. ໃນຟິລິບປິນ E-Net ແລະ ຄູ່ຮ່ວມພັດທະນາອື່ນໆ ໄດ້ອຳນວຍຄວາມສະດວກໃຫ້ກັບພື້ນທີ່ເໝືອນຈິງ ເພື່ອການເຄື່ອນໄຫວ ແລະ ການສະໜັບສະໜູນຊາວໜຸ່ມ. ຊາວໜຸ່ມໃນຊຸມຊົນມີສ່ວນຮ່ວມຢ່າງຫ້າວຫັນໃນການສົ່ງເສີມດ້ານການສຶກສາ, ການບັນເທົາທຸກ ແລະ ກິດຈະກຳຕ່າງໆ. ການໂຄສະນາຕ່າງໆທີ່ນຳໂດຍຊາວໜຸ່ມໄດ້ຮັບການອອກແບບມາເພື່ອໃຫ້ລັດຖະບານມີຄວາມຮັບຜິດຊອບ ແລະ ມີໜ້າທີ່ປົກປ້ອງພົນລະເມືອງ ໃນດ້ານສະບຽງອາຫານ, ສິດທິໃນການສຶກສາ ແລະ ສິດທິໃນການຖາມ. ຈາກຜົນຂອງການວິໄຈ ແລະ ຂໍ້ສະເໜີແນະ ນັກວິໄຈໜຸ່ມໄດ້ພັດທະນາວິດີໂອ ແລະ ພອດເຄສ (podcasts), ແລະ ຈັດສຳມະນາຜ່ານເວັບໄຊ ແລະ ຖ່າຍທອດສົດຜ່ານ Facebook ເພື່ອໃຫ້ເຂົ້າເຖິງຊາວໜຸ່ມໄດ້ຫຼາຍຂຶ້ນ.

ຄູ່ຮ່ວມພັດທະນາ ຂອງ YAR ມຸ່ງໝັ້ນທີ່ຈະດຳເນີນການຕິດຕາມຜົນໃນພື້ນທີ່ຕໍ່ໄປ ແລະ ແຈ້ງການສະໜັບສະໜູນນະໂຍບາຍຂອງພວກເຂົາໂດຍອີງຕາມກະບອກສຽງຂອງຊາວໜຸ່ມຈາກຄວາມເປັນຈິງພື້ນຖານ. ASPBAE ມີຄວາມຍິນດີ ທີ່ໄດ້ເຫັນຜົນງານຂອງຊາວໜຸ່ມທີ່ກໍ່ໂຕເປັນຮູບປະທຳຂຶ້ນ ແລະ ໄດ້ກ່າວເຖິງຄວາມເປັນຈິງຂອງຊາວໜຸ່ມດ້ອຍໂອກາດໃນພາກພື້ນ.

# ແນວຄວາມຄິດ Soft Skills ໄດ້ຈັດຕັ້ງປະຕິບັດ ໃນຂັ້ນແຂວງ

*ດາລຸນນີ ສີສຸລາດ*, DVV International



ຜູ້ບໍລິຫານໂຄງການ ທັກສະຊາວໜຸ່ມ

ການຝຶກອົບຮົມ ຊ໊ອບສະກິລ ຫຼື ທັກສະສັງຄົມແມ່ນຫົວຂໍ້ໜຶ່ງທີ່ໜ້າສົນໃຈ ໃນປະຈຸບັນນີ້ ມີຜູ້ຕິດຕາມ ແລະ ສົນໃຈຢາກເຂົ້າຮ່ວມ ໂດຍອີງຕາມບໍລິບົດຂອງແຕ່ລະກຸ່ມເປົ້າໝາຍບໍ່ວ່າຈະເປັນກຸ່ມນັກຮຽນ, ໄວໜຸ່ມ, ພະນັກງານທັງໃນຂັ້ນພື້ນຖານ ແລະ ຂັ້ນສູນກາງ ລວມທັງບັນດາຜູ້ອຳນວຍຄວາມສະດວກໃນຊຸມຊົນ. ການຝຶກອົບຮົມແຕ່ລະຄັ້ງແມ່ນມີຄວາມແຕກຕ່າງກັນທັງໃນດ້ານເນື້ອໃນ ແລະ ວິທີການເນື່ອງຈາກວ່າການເຮັດວຽກ ແລະ ການດຳລົງຊີວິດຂອງພວກເຂົາເຈົ້າແມ່ນແຕກຕ່າງກັນ.

ການຈັດຝຶກອົບຮົມໃນແຕ່ລະຄັ້ງແມ່ນມີຄວາມທ້າທາຍແຕກຕ່າງກັນອອກໄປ ໂດຍອີງຕາມທ້ອງຖິ່ນທີ່ເຮົາໄປຈັດຝຶກອົບຮົມ ແລະ ກຸ່ມເປົ້າໝາຍທີ່ແຕກຕ່າງກັນອອກໄປ. ໃນກຸ່ມໄວໜຸ່ມ ພວກເຂົາເຈົ້າມີຄວາມກະຕືລືລົ້ນຫຼາຍທີ່ຈະເຂົ້າຮ່ວມກິດຈະກຳ ເຊິ່ງການຈັດກິດຈະກຳບາງຄັ້ງແມ່ນຄວບຄຸມຍາກ, ເນື່ອງຈາກວ່າເຂົາເຈົ້ານັ້ນເອົາໂຕເອງເຂົ້າໄປມີສ່ວນຮ່ວມໃນກິດຈະກຳຫຼາຍ ຈົນບາງຄັ້ງກໍ່ເກີດຄວາມຂັດແຍ່ງກັນແທ້ໆໃນລະຫວ່າງການຈັດກິດຈະກຳ; ຕົວຢ່າງ ໃນກິດຈະກຳການແກ້ໄຂຂໍ້ຂັດແຍ່ງເຊິ່ງໄດ້ມີການຈັດແບ່ງກຸ່ມເປັນຫຼາຍລົງແລ້ວສ້າງສະຖານະການໃຫ້ເກີດຂໍ້ຂັດແຍ່ງ ເພື່ອໃຫ້ເຂົາເຈົ້າໄດ້ມີການເຈລະຈາກັນ ແຕ່ທ້າຍທີ່ສຸດກໍບໍ່ໄດ້ເຈລະຈາກັນ ແລະ ຂໍຍຸດຕິກິດຈະກຳ ເພາະເຂົາເຈົ້າບໍ່ສາມາດເຈລະຈາກັນ ແລະ ຫາຂໍ້ຕົກລົງທີ່ເປັນທຳໄດ້.

ໃນບາງຄັ້ງ, ການດຳເນີນກິດຈະກຳກັບແມ່ນໃຊ້ເວລາຫຼາຍກວ່າທີ່ໄດ້ກຳນົດໄວ້ ແລະ ໄດ້ໃຊ້ທັງແຮງກາຍ ແຮງໃຈ, ທີມງານຄູຝຶກແມ່ນໄດ້ມີການກຽມພ້ອມເພື່ອຊ່ວຍເຫຼືອຄູຝຶກຫຼັກຕະຫຼອດເວລາ ເນື່ອງຈາກວ່າໃນບາງທ້ອງຖິ່ນພາສາປາກເວົ້າບໍ່ຄືກັນອາດຈະຕ້ອງໄດ້ຊ່ວຍກັນແປຫຼືອະທິບາຍຄວາມໝາຍ ຫຼື ໄດ້ປັບປຸງວິທີການດຳເນີນກິດຈະກຳ ເນື່ອງຈາກວ່າກຸ່ມເປົ້າໝາຍໃນບາງເຂດນັ້ນບໍ່ສາມາດເຂົ້າໃຈຫຼືຮ່ວມກິດຈະກຳແບບຕາມຮູບແບບທີ່ເຮົາໄດ້ວາງແຜນໄວ້ ໂດຍອີງຕາມທ້ອງຖິ່ນ ແລະ ຮີດຄອງປະເພນີ ແລະ ຄວາມນັບຖື.

ໃນບາງເຂດກຸ່ມເປົ້າໝາຍແມ່ນມີວິຖີການເຮັດວຽກໃນຮູບແບບການພັດທະນາຊຸມຊົນ ເຊິ່ງຈະມີຂະແໜງການຕ່າງໆເຂົ້າຮ່ວມຝຶກນຳ ສະນັ້ນກຸ່ມເປົ້າໝາຍສ່ວນຫຼາຍແມ່ນຈະຮູ້ຈັກ ແລະ ລຶ້ງເຄີຍກັນດີ. ຜູ້ເຂົ້າຮ່ວມມີຄວາມເຂົ້າໃຈຫົວຂໍ້ທີ່ເຮົາຈະຝຶກ ແລະ ມີສ່ວນຮ່ວມເຕັມທີ່ ເຊິ່ງເຂົາເຈົ້າສາມາດນຳເອົາກິດຈະກຳຂອງພວກເຮົາໄປຝຶກຕໍ່ໄດ້. ແຕ່ກໍຍັງເຫັນໃນລະຫວ່າງການດຳເນີນກິດຈະກຳຍັງບໍ່ໄດ້ເຕັມສ່ວນເພາະວ່າເຂົາເຈົ້າມີຄວາມເກງໃຈກັນ ເນື່ອງຈາກວ່າຮູ້ບົດບາດໜ້າທີ່ຕຳແໜ່ງຂອງກັນ ແລະ ກັນ ແຕ່ຜົນໄດ້ຮັບອອກມາກໍໄດ້ຕາມຄາດໝາຍ. ນອກນັ້ນກຸ່ມຜູ້ເຂົ້າຮ່ວມຍັງໄດ້ມີການແລກປ່ຽນບົດຮຽນຮ່ວມກັນໃນຫຼາຍຫົວຂໍ້ທີ່ກ່ຽວຂ້ອງກັບການພັດທະນາທ້ອງຖິ່ນ ການສ້າງແຜນກິດຈະກຳຮ່ວມກັນ ເພື່ອຈະສາມາດນຳໄປໃຊ້ໄດ້ໃນການເຮັດວຽກຕົວຈິງຂອງເຂົາເຈົ້າ ແລະ ຜ່ານການຝຶກທັກສະສັງຄົມຍັງເຫັນໄດ້ກຸ່ມຜູ້ເຂົ້າຮ່ວມຊ່ວຍເຫຼືອກັນໃນການແກ້ໄຂບັນຫາ ຫຼື ສົ່ງເສີມການເຮັດວຽກລະຫວ່າງແຕ່ລະຂະແໜງການ.

ການຝຶກອົບຮົມໃນຂັ້ນທ້ອງຖິ່ນແມ່ນຈະນຳໃຊ້ກິດຈະກຳທີ່ສະທ້ອນໃຫ້ເຫັນເຖິງບົດບາດຂອງທັກສະ ແລະ ຫົວຂໍ້ຕ່າງໆເພື່ອໃຫ້ເຂົາເຈົ້າເຫັນໄດ້ຄວາມສຳຄັນຂອງບັນດາອົງປະກອບຕ່າງໆ ຕໍ່ມາດ້ວຍການຖາມ-ຕອບສະທ້ອນຄືນຜ່ານຂະບວນການໃນກິດຈະກຳ, ໃຊ້ກຸ່ມສົນທະນາ, ເຮັດກໍລະນີສຶກສາແລ້ວສະຫຼຸບເປັນທິດສະດີທີ່ສາມາດຈັບຕ້ອງໄດ້ ແລະ ມີຂໍ້ມູນອ້າງອີງທີ່ເຊື່ອຖືໄດ້. ໃນບາງຄັ້ງຜູ້ເຂົ້າຮ່ວມກໍຍົກເອົາບັນຫາ ຫຼື ກໍລະນີສຶກສາຂຶ້ນມາສົນທະນາເພື່ອຫາທາງແກ້ໄຂບັນຫາ ຫຼື ຂໍ້ຄົງຄ້າທີ່ເກີດຂຶ້ນໃນອົງກອນຂອງເຂົາເຈົ້າ.

ການຄິດຫາວິທີການທີ່ແທດເໝາະກັບເຂົາເຈົ້າ ສ້າງກິດຈະກຳເພື່ອໃຫ້ເຂົາເຈົ້າໄດ້ຄິດ ແລະ ວິເຄາະປັນຫາ ປັດໄຈຕ່າງໆໃນການດຳລົງຊີວິດ ແລະ ສັນຫາບົດລະຄອນທີ່ກ່ຽວຂ້ອງກັບຫົວຂໍ້ການຝຶກອົບຮົມເພື່ອໃຫ້ເຂົາເຈົ້າໄດ້ຮຽນຮູ້ ແລະສະທ້ອນຄືນຜ່ານການສະແດງລະຄອນທີ່ກ່ຽວຂ້ອງກັບການດຳລົງຊີວິດຂອງເຂົາເຈົ້າ ເພື່ອໃຫ້ເຂົາເຈົ້າຮັບຮູ້ ແລະ ເຂົ້າໃຈກ່ຽວກັບທັກສະຕ່າງໆຫຼາຍຂຶ້ນ. ສິ່ງສຳຄັນນອກຈາກການມີປື້ມຄູ່ມືແລ້ວ ສຳລັບຄູຝຶກແມ່ນການເຮັດວຽກບ້ານ, ປະເມີນຄວາມຕ້ອງການຂອງກຸ່ມເປົ້າໝາຍກ່ອນຝຶກ ແລະ ວາງແຜນຝຶກອົບຮົມຮ່ວມກັນກັບທີມງານ ແລະ ທີມງານຄູຝຶກຕິດຕາມການດຳເນີນກິດຈະກຳ ເພື່ອຈະເຮັດໃຫ້ການຝຶກອົບຮົມນັ້ນດຳເນີນໄປຢ່າງສະດວກ ແລະ ບັນລຸເປົ້າໝາຍທີ່ວາງໄວ້.



**ສິ່ງທີ່ໜ້າສົນໃຈ**

**Important Website in region**

www.nfedi.org
www.rda.org.la
www.aspbae.org
www.seameocelll.org

**ສິ່ງພິມທີ່ໜ້າສົນໃຈ**

Adult Education and Development
AED 86 (2019): The good adult educator
AED 85: Role and Impact of Adult Education
AED 84: Inclusion and Diversity
AED 83: Skills and Competencies

**International Perspectives in Adult Education**

IPE 79(2019): The contribution of adult education to active participatory citizenship
IPE 77: Rethinking adult learning and education - Asia perspectives
IPE 78: Adult education as a key to development - challenges and success factors
IPE 76: Refugees: A challenge for adult education

**ຈົດໝາຍຂ່າວ**

The ASPBAE Bulletin access via www.aspbae.org
NEXUS - access via www.uil.unesco.org
Voice Rising - access via www.icae2.org
Education Policy Matters - via www.unescobkk.org

**ສິ່ງພິມໃໝ່**

**Curriculum institutionALE** ສະບັບພາສາລາວ
**DVV International Annual Report 2020**
**Reaching the Marginalized -** Good Practices in ALE in the Middle East, Southeast and South Asia
**Handbook for NFE Facilitators**
**Soft Skills** Training Manual for Falicitator
**Soft Skills** Instructional Package
**Curriculum globALE in** Lao language

**ຈັດພິມໂດຍ ດີວີວີ ອິນເຕີເນເຊິນແນວ**
**ຮ່ວມກັບຄູ່ຮ່ວມພັດທະນາໃນ ສປປ ລາວ, ກຳປູເຈຍ ແລະ ໃນອາຊີໃຕ້ ແລະ ອາຊີຕາເວັນອອກສ່ຽງໃຕ້**
**ທ່ານສາມາດຂໍຈົດໝາຍຂ່າວນີ້ໄດ້ທີ່ ຫ້ອງການຂອງພວກເຮົາ**

**ກອງບັນນາທິການ**: ພິລານີ ພິດສະໄໝ, ອຸ່ນເພັງ ຄຳມັງ, ຂັນທອງ ອິນທະຈັກ
**ທີມງານບັນນາທິການ**: ດາລຸນີ ສີສຸລາດ, ດອກຄຳ ຊົມສີຫາປັນຍາ, ສົມໃຈ ແກ້ວເມກ
**ບັນນາທິການ**: ໂຢຮັນ ແຮລເມັນ

**ດີວີວີ ອິນເຕີເນເຊິນແນວ**
ຫ້ອງການປະຈຳພາກພື້ນອາຊີຕາເວັນອອກສ່ຽງໃຕ້
351/19 ຖະໜົນວັດນາກໃຫຍ່, ບ້ານທ່າພະລານໄຊ
ເມືອງສີສັດຕະນາກ
ຕູ້ ປ.ນ. 1215, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ.: +856 21 315832-3
ແຟັກ: +856 21 312511
info@dvv-international.la
www.dvv-international.la

**Education for Everyone. Worldwide. Lifelong.**